ວາລະສານວິທະຍາສາດສັງຄົມ (ວວສ) ສະບັບ 24, ຊຸດທີ 2 (2024) 191-203

ວາລະສານວິທະຍາສາດສັງຄົມ ມະຫາວິທະຍາໄລແຫ່ງຊາດ

ISSN: 2664-6331 Homepage: https://ssj.sjnl.la/

https://doi.org/10.71026/ss.2024.02023




# ສຶກສາຜົນກະທົບຂອງການຫວ່າງງານຕໍ່ກັບການການເກີດອາຊະຍາກຳ ໃນ ສປປ ລາວ

ນິດດາວອນ ວົງສະຫງ່າ, ລຳພູນ ບຸນວິໄລ, ພອນອະໄພ ໄຊຍະວົງ, ບຸນວິໄລ ສີຈັນທະລາ
ແລະ ແຫວນເພັດ ໄຊຍະວົງ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ
Email: jp.nidda@gmail.com

**ຂໍ້ມູນບົດຄວາມ**: ວັນທີສົ່ງ: 19/2/2024 ວັນທີປັບປຸງຄັ້ງທີ: 21/4/2024 ວັນທີຕອບຮັບ 30/6/2024

**ບົດຄັດຫຍໍ້**

ບົດຄົ້ນຄວ້າສະບັບນີ້ແມ່ນໄດ້ສຶກສາຜົນກະທົບຂອງການຫວ່າງງານຕໍ່ກັບການກໍ່ອາຊະຍາກຳໃນ ສປປ ລາວ. ໂດຍມີຈຸດປະສົງເພື່ອສຶກສາສະພາບລວມຂອງການກໍ່ອາຊະຍາກຳ ໃນ ສປປ ລາວ ຕັ້ງແຕ່ປີ 2013-2019 ແລະ ຜົນກະທົບຂອງການຫວ່າງງານ ແລະ ປັດໄຈອື່ນໆທີ່ມີຜົນຕໍ່ກັບການກໍ່ອາຊະຍາກຳ ໃນ ສປປ ລາວ.ໂດຍ ນຳໃຊ້ວິທີການວິເຄາະໃນຮູບແບບສົມຜົນການຄາດປະ ມານກຳລັງສອງນ້ອຍສຸດເຂົ້າໃນການປະເມີນຄ່າສຳປະສິດທີ່ສະແດງເຖິງຄວາມສຳພັນລະຫວ່າງຕົວປ່ຽນຕາມ ແລະ ຕົວປ່ຽນອິດສະຫຼະທີ່ກ່ຽວຂ້ອງໃນແບບຈຳ ລອງ, ພ້ອມທັງກວດສອບບັນຫາພະຫຸສຳພັນໂດຍນຳໃຊ້ວິທີ Correlation Matrix ແລະ ກວດບັນຫາສະຫະສຳພັນດ້ວຍນຳໃຊ້ວິທີ Breusch-pagan/Cook - Weisberg test ແລະ ແກ້ໄຂບັນຫາດັ່ງກ່າວດ້ວຍວິທີການປັບປ່ຽນຄ່າຜັນປ່ຽນມາດຕະຖານຂອງ OLS.

ຜົນການຄົ້ນຄວ້າສາມາສະຫຼຸບໄດ້ວ່າ: ສະພາບລວມຂອງການກໍ່ອາຊະຍາກຳໃນ ສປປ ລາວນັບແຕ່ປີ 2013-2019 ສາມາດສະຫຼຸບໄດ້ຄື: ປີ 2013 ມີອາຊະຍາກຳເກີດຂຶ້ນ 3,385 ຄັ້ງ, 2014 ມີ 3,959 ຄັ້ງ(ທຽບກັບ2013 ເພີ່ມຂຶ້ນ16.95%), 2015 ມີ 5,147 ຄັ້ງ(ທຽບກັບ 2014 ເພີ່ມຂຶ້ນ 30%), ປີ 2016 ມີ 5,066 ຄັ້ງ(ທຽບໃສ່ 2015 ຫຼຸດລົງ 1.5%), ປີ 2017 ມີ 5,136 ຄັ້ງ (ທຽບໃສ່ 2016 ເພີ່ມຂຶ້ນ 1.3%), ປີ 2018 ມີ 6,171ຄັ້ງ(ທຽບກັບ 2017 ເພີ່ມຂຶ້ນ 20.15%), ປີ2019 ມີ 5,820 ຄັ້ງ (ທຽບກັບ2018ຫຼຸດລົງ 5.6%) ແລະ ການຫວ່າງງານໃນ ສປປ ລາວ ໃນ ປີ 2017 ແມ່ນ 9.4% ເຊິ່ງແບ່ງເປັນແຕ່ລະແຂວງໄດ້ດັ່ງນີ້: ນະຄອນຫຼວງວຽງຈັນ 0.03%, ຜົ້ງສາລີ 0.04%, ຫຼວງນ້ຳທາ 0.06%, ອຸດົມໄຊ 0.06%, ບໍ່ແກ້ວ 0.06%, ຫຼວງພະບາງ0.05%, ຫົວພັນ 0.07%, ໄຊຍະບູລີ 0.03%, ຊຽງຂວາງ 0.04%, ວຽງຈັນ 0.06%, ບໍລິຄຳໄຊ 0.06%, ຄຳມ່ວນ 0.06%, ສະຫວັນນະເຂດ 0.08%, ຈຳປາສັກ 0.05%, ສາລະວັນ 0.07%, ເຊກອງ 0.05%, ອັດຕະປື 0.05%, ໄຊສົມບູນ 0.06%. ເຊິ່ງແຂວງທີ່ມີການຫວ່າງງານສູງທີ່ສຸດແມ່ນແຂວງສະຫວັນນະເຂດ ແລະ ແຂວງທີ່ມີການຫວ່າງງານຕ່ຳສຸດແມ່ນແຂວງໄຊຍະບູລີ. ຈາກການວິເຄາະເຫັນໄດ້ວ່າຄວາມໜ້າແໜ້ນຂອງປະຊາກອນ,ຈຳນວນຫົວໜ່ວຍທຸລະກິດ ແລະ ລາຍໄດ້ຂອງຄົວເຮືອນສົ່ງຜົນເຮັດໃຫ້ມີການກໍ່ອາຊະຍາກຳເພີ່ມຂຶ້ນ,ແຕ່ພົນລະເມືອງທີ່ອາໄສຢູ່ໃນຕົວເມືອງເຮັດໃຫ້ການກໍ່ອາຊະຍາກຳຫຼຸດລົງ. ສ່ວນການຫວ່າງງານ,ຈຳນວນເຈົ້າໜ້າທີ່ຕຳຫຼວດແລະ ລະດັບການສຶກສາຂອງພົນລະເມືອງບໍ່ມີຜົນຕໍ່ກັບການກໍ່ອາຊະຍາກຳ.

**ຄຳສັບສຳຄັນ:** ຜົນກະທົບ, ການຫວ່າງງານ, ການການເກີດອາຊະຍາກຳ ແລະ ສປປ ລາວ

# Study the impact of the Unemployment on Crime in Lao PDR

VONGSANGA.N, BOUNVILAY.L, XAYAVONG.P, SICHATHALA.B
and SAYAVONG.V
Faculty of Economics & Business Management, National University of Laos.
jp.nidda@gmail.com

**Abstract**

This research the Impact of the Unemployment on crime in Lao PDR. The objectives of this research are to study the overview of crime rate happening in Lao PDR since 2013-2019 and the impact of unemployment and other factors on crime in Lao PDR. Using the model of ordinary Least square Analysis: OLS approximation to evaluate the coefficients the represent the relationship between the dependent variable and the associate independent variable in the model, as well as to test the Multicollinearity problem of data by using Correlation Matrix test method and the Heteroskedasticity by using Breusch-pagan / Cook - Weisberg test method. Then we use Heteroskedasticity robust-standard error method to modify the data.

The result of the research can be summarized as followed: The crimes were happened 3,385 times in 2013, 3,959 times in 2014 (compare with 2013 increased 16.95%), 5,147 times in 2015 (compare with 2014 increased 30%), 5,066 times in 2016 (compare with 2015 decreased 1.5%),5,136 times in 2017 (compare with 2016 increased 1.3%), 6.171 times in 2018 (compare with 2017 increased 120.5%),5,820 times in 2019 (compare with 2018 decreased 5.6%) and the unemployment in Lao PDR in 2017 had 9.4% that can separate all provinces such as: Vientiane capital 0.03%, Phongsaly 0.04%, Luangnamtha 0.06%, Oudomxay 0.06%, Bokeo 0.05%, Luangphabang 0.05%, Huaphanh 0.07%, Xayabury 0.04%, Xiengkhuang 0.04%, Vientiane 0.04%, Borikhamxay 0.05%, Khammuane 0.0618%, Savannakhet 0.08%, Champasack 0.05%, Saravane 0.07%, Sekong 0.05%, Attapeu 0.05% and Xaysomboon 0.05%. The highest of unemployment rate was Savannakhet province, and the lowest of the unemployment rate was Xayabury province.

An analysis of impact of the Unemployment on crime in Lao PDR could be show that: the density of population, the number of small and medium enterprise (SME) and household income would increase the crime rate, but the population live in Urban would decrease the crime rate. Moreover, the unemployment, the number of policers and the level of education has not affected on crime rate.

**Keywords:** impact, Unemployment, Crime and Lao PDR

**ຄວາມເປັນມາຂອງບັນຫາ**

ອາຊະຍາກຳຖືເປັນບັນຫາຂອງສັງຄົມທີ່ມີຄວາມສຳຄັນ ເພາະວ່າບັນຫາດັ່ງກ່າວໄດ້ກໍ່ໃຫ້ເກີດຄວາມເສຍຫາຍຕໍ່ຊີວິດ ແລະ ຊັບສິນຂອງບຸກຄົນທົ່ວໄປໃນສັງຄົມ ຈຳນວນອາຊະຍາກຳ ແລະ ຄວາມຮຸນແຮງຂອງອາຊະຍາກຳຈຶ່ງສະທ້ອນເຖິງຄຸນນະພາບຊີວິດຂອງປະຊາຊົນ ແລະ ສົ່ງຜົນກະທົບຕໍ່ການພັດທະນາປະເທດ ໃນທາງສັງຄົມວິທະຍາ ການສຶກສາກ່ຽວກັບອາຊະຍາກຳເປັນການສຶກສາພຶດຕິກຳທີ່ບິດເບືອນຂອງບຸກຄົນຕໍ່ສັງຄົມ ລວມທັງສາເຫດຂອງການກໍ່ອາຊະຍາກຳໂດຍທິດສະດີທາງສັງຄົມວິທະຍາກ່ຽວກັບສາເຫດຂອງອາຊະຍາກຳມີຫຼາຍທິດສະດີໄດ້ແກ່: ທິດສະດີກ່ຽວກັບໂຄງສ້າງຂອງສັງຄົມ ແລະ ສະຖາບັນສັງຄົມ, ທິດສະດີຕາບາບ ແລະ ທິດສະດີເຊິ່ງລະບຸວ່າອາຊະຍາກຳເກີດຂຶ້ນຈາກຫຼາຍສາເຫດປະກອບກັນເຊັ່ນ: ສະພາບທາງຄອບຄົວ, ສະພາບທາງເສດຖະກິດ, ການປ່ຽນແປງທາງສັງຄົມ ແລະ ສະພາບແວດລ້ອມ ແລະ ຄວາມເຊື່ອມໂຊມທາງສິນລະທຳເປັນຕົ້ນ. ນອກຈາກນີ້, ບັນຫາອາຊະຍາກຳນັ້ນຍັງເປັນບັນຫາທີ່ມີຄວາມສຳຄັນເນື່ອງຈາກອາຊະຍາກຳບໍ່ພຽງແຕ່ສົ່ງຜົນກະທົບຕໍ່ປັດໄຈບຸກຄົນ (individual) ເທົ່ານັ້ນ ແຕ່ຍັງສົ່ງຜົນກະທົບເຖິງສັງຄົມສ່ວນລວມອີກດ້ວຍ (Extremality) ທັງຜົນກະທົບທາງສັງຄົມ ແລະ ທາງເສດຖະສາດ ເຊິ່ງໃນທັດສະນະຂອງນັກເສດຖະສາດການເກີດອາຊະຍາກຳສົ່ງຜົນກະທົບຕໍ່ທາງດ້ານເສດຖະກິດ ບໍ່ວ່າຈະເປັນຄວາມຢ້ານກົວຂອງຄົນໃນສັງຄົມ ແລະ ການຫຼຸດລົງຂອງກິດຈະກຳທາງດ້ານເສດຖະກິດ ແລະ ຖ້າຫາກມີການເກີດອາຊະຍາກຳສູງຈະສົ່ງຜົນເຖິງຄວາມເຊື່ອໝັ້ນທີ່ຫຼຸດລົງຂອງນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ສົ່ງຜົນເຮັດໃຫ້ການລົງທຶນຫຼຸດລົງ ເຊິ່ງເປັນສາເຫດເຮັດໃຫ້ການພັດທະນາ ແລະ ການຂະຫຍາຍຕົວຂອງເສດຖະກິດຫຼຸດລົງເຊັ່ນດຽວກັນ ແລະ ການເກີດອາຊະຍາກຳຍັງກໍ່ໃຫ້ເກີດມີຕົ້ນທຶນ ( ໂດຍຕົ້ນທຶນນີ້ມາຈາກພາສີຂອງປະຊາຊົນ) ທີ່ຕ້ອງໃຊ້ໃນການປ້ອງກັນ ແລະ ປາບປາມຄະດີຕ່າງໆອີກດ້ວຍ.

ນອກຈາກນີ້, ການເກີດອາຊະຍາກຳຍັງສົ່ງຜົນກະ ທົບຕໍ່ຄວາມສຸກຂອງຄົນໃນສັງຄົມຫຼຸດລົງອີກດ້ວຍ ຈາກການສຶກສາຂອງ Powdthavee (2005) ພົບວ່າ ການເກີດອາຊະຍາກຳໂດຍສະເພາະອາຊະຍາກຳປະເພດຮ້າຍແຮງ ແລະ ສະເທືອນຂວັນໃນພື້ນທີ່ໃດໜຶ່ງນັ້ນໄດ້ສົ່ງຜົນກະທົບທາງດ້ານຄວາມຢ້ານກົວຂອງຄົນໃນພື້ນທີ່ອື່ນອີກດ້ວຍ ແລະ ຍັງສະແດງຫຼັກຖານວ່າ ການເກີດອາຊະຍາກຳສົ່ງຜົນຕໍ່ຜູ້ເສຍຫາຍຈາກອາຊະຍາກຳ ທາງດ້ານຊີວິດການເປັນຢູ່ ແລະ ຄວາມສຸກທີ່ຫຼຸດລົງ. ການສຶກສາກ່ຽວກັບອາຊະຍາກຳໃນທັດສະນະຂອງນັກເສດຖະສາດໄດ້ເລີ່ມຕົ້ນດ້ວຍບົດຂຽນຂອງ Gary Becker ໃນປີ 1968 ເຊິ່ງໃຫ້ເຫດຜົນວ່າ ບຸກຄົນໃດໜຶ່ງຕັດສິນໃຈກໍ່ອາຊະຍາກຳເມື່ອອັດຖາປະໂຫຍດລວມທີ່ຄາດວ່າຈະໄດ້ຮັບຈາກການກໍ່ອາຊະຍາກຳຫຼາຍກວ່າປະໂຫຍດທີ່ຄາດວ່າຈະໄດ້ຮັບຈາກການໃຊ້ເວລາ ແລະ ຊັບພະຍາກອນທີ່ມີໄປໃນການເຮັດວຽກອື່ນ ໂດຍໄດ້ມີການຄຳນຶງເຖິງໂອກາດ, ຄວາມເປັນໄປໄດ້ໃນການຖືກຈັບກຸມ ແລະ ຖືກລົງໂທດ ໃນແບບຈຳລອງຂອງ Becker, ການກໍ່ອາຊະຍາກຳແມ່ນຄືກັນກັບການເຮັດວຽກປະເພດໜຶ່ງ (crime as-work mode l) ສ່ວນປັດໄຈທີ່ມີຜົນຕໍ່ການຕັດສິນໃຈໃນການກໍ່ອາຊະຍາກຳ ຫຼື ອຸປະທານຂອງອາຊະຍາກຳ (supply of crime) ໄດ້ແກ່ ຜົນຕອບແທນຂອງການເຮັດວຽກທີ່ຖືກຕ້ອງຕາມກົດໝາຍ, ຜົນປະໂຫຍດ ແລະ ຕົ້ນທຶນຂອງອາຊະຍາກຳ, ຄວາມເປັນໄປໄດ້ໃນການຖືກຈັບກຸມ, ຄວາມຮຸນແຮງຂອງຂະບວນການຍຸດຕິທຳ, ຊັບສິນທີ່ມີຢູ່, ລັດສະນິຍົມ ແລະ ຄວາມເພິ່ງພໍໃຈຂອງບຸກຄົນເປັນຕົ້ນ. ຜົນງານຂອງ Ehrtich (1973) ເປັນອີກແບບຈຳລອງໜຶ່ງເຊິ່ງກຳນົດໃຫ້ການກໍ່ອາຊະຍາກຳມີລັກສະນະເປັນການເຮັດວຽກປະເພດໜຶ່ງເຊັ່ນດຽວກັນ Becker (1968) ໂດຍ Ehrltich ກຳນົດໃຫ້ບຸກຄົນເລືອກລະຫວ່າງການເຮັດວຽກສຸດຈະລິດ ແລະ ການກໍ່ອາຊະຍາກຳພາຍໃຕ້ເວລາທີ່ຈຳກັດ ແລະ ຄວາມເປັນໄປໄດ້ໃນການຖືກຈັບ ແລະ ລົງໂທດ ພາຍໃຕ້ແບບຈຳລອງທີ່ບຸກຄົນຕັດສິນໃຈເລືອກໃນການເຮັດວຽກຕ່າງໆ ລວມທັງການກໍ່ອາຊະຍາກຳເຊັ່ນນີ້ ການຫວ່າງງານຈຶ່ງມີບົດບາດໃນການກຳນົດການກໍ່ອາຊະຍາກຳ ເນື່ອງຈາກວ່າບຸກຄົນທີ່ຫວ່າງງານ ແລະ ບຸກຄົນທີ່ມີລາຍໄດ້ຕໍ່າເມື່ອທຽບກັບເວລາທີ່ໃຊ້ໄປໃນການເຮັດວຽກສຸດຈະລິດ ຈຶ່ງເຮັດໃຫ້ຄົນຫັນໄປກໍ່ອາຊະຍາກຳຕ່າງໆເພື່ອຫາລາຍໄດ້ມາທົດແທນ.ນອກຈາກການຫວ່າງງານຈະມີບົດບາດໃນການກຳນົດອຸປະທານຂອງ

ອາຊະຍາກຳໃນແບບຈຳລອງສະຖິຕິ (static one-period model) ແລ້ວການຫວ່າງງານກໍ່ຍັງມີບົດບາດກໍ່ໃຫ້ ເກີດອາຊະຍາກຳໃນແບບຈຳລອງ (dynamic model) ນຳເຊັ່ນກັນ ກ່າວຄືເມື່ອບຸກຄົນຈະຕັດສິນໃຈກໍ່ອາຊະຍາກຳໃນປະຈຸບັນຈະຄຳນຶງເຖິງປະຫວັດອາຊະຍາກຳທີ່ຈະຕິດຕົວໄປຮອດອະນາຄົດຖ້າຫາກຖືກຈັບກຸມໄດ້ ເຊິ່ງຈະມີຜົນກະທົບຕໍ່ການເຮັດວຽກໃນອະນາຄົດ ແລະ ຄ່າຈ້າງທີ່ຈະໄດ້ຮັບ.

ໃນ ສປປ ລາວ ບັນຫາອາຊະຍາກຳຖືໄດ້ວ່າເປັນບັນຫາທີ່ລັດຖະບານໄດ້ໃຫ້ຄວາມສຳຄັນ ເພາະຖືໄດ້ວ່າຄວາມສະຫງົບສຸກຂອງສັງຄົມເປັນສິ່ງຄວນໄດ້ເອົາໃຈໃສ່ ແລະ ມັນຍັງສົ່ງຜົນສະທ້ອນຕໍ່ຄວາມໝັ້ນຄົງທາງດ້ານການເມືອງ ແລະ ຄວາມມີສະຖຽນລະພາບຂອງປະເທດຊາດ. ນອກຈາກນັ້ນ, ອາດຊະຍາກຳຍັງຖືໄດ້ວ່າເປັນປັດໄຈທີ່ພົວພັນເຖິງຄວາມໜ້າເຊື່ອຖືຂອງປະເທດເຮົາໃນມຸມມອງຂອງຕ່າງປະເທດ, ນັກທ່ອງທ່ຽວ ຫຼື ນັກລົງທຶນທີ່ສົນໃຈເຂົ້າມາລົງທຶນ ໃນ ສປປ ລາວ ອີກດ້ວຍ. ດັ່ງນັ້ນ, ບັນດາພາກສ່ວນທີ່ກ່ຽວຂ້ອງ, ປກສ ແຂວງ, ປກສ ເມືອງຈຶ່ງໄດ້ວາງແນວທາງນະໂຍບາຍ, ເອົາໃຈໃສ່ ແລະ ປັບປຸງຕາໜ່າງສືບຂ່າວໃຫ້ມີຄຸນນະພາບສາມາດກຳແໜ້ນເປົ້າໝາຍຢ່າງຖືກຕ້ອງຕາມກົດໝາຍ ແລະ ຫຼັກການວິຊາສະເພາະ, ເພີ່ມທະວີ ກໍ່ສ້າງ ແລະ ຍົກລະດັບພະນັກງານສືບສວນ-ສອບສວນໃຫ້ມີຄວາມຮູ້ຄວາມສາມາດ, ມີຄວາມຊຳນິຊຳນານໃນດ້ານວຽກງານວິຊາສະເພາະ, ດຳເນີນການຖືກຕ້ອງຕາມລະບຽບກົດໝາຍ, ຮັບປະກັນຄວາມຍຸດຕິທຳດ້ານສັງຄົມ, ໂຄສະນາສຶກສາອົບຮົມການເມືອງ-ແນວຄິດໃຫ້ພໍ່ແມ່ປະຊາຊົນບັນດາເຜົ່າເຂົ້າໃຈຕໍ່ແນວທາງນະໂຍບາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງພັກ-ລັດ ໂດຍສະເພາະສຸມໃສ່ວຽກງານການຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ການປັບປຸງກໍ່ສ້າງກຳລັງປ້ອງກັນຄວາມສະຫງົບໃຫ້ປອດໃສ, ໜັກແໜ້ນເຂັ້ມງວດ ແລະ ມີແບບແຜນທີ່ທັນສະໄໝ, ການພົວພັນຮ່ວມມືກັບຕ່າງປະເທດ ແລະ ຍົກສູງຄຸນນະພາບເປັນເສນາທິການໃຫ້ຄະນະພັກ ໃນຂອບເຂດຄວາມຮັບຜິດຊອບວຽກງານຂອງຕົນ, ສະພາບ, ຜົນງານທີ່ພົ້ນເດັ່ນ, ດ້ານອ່ອນຂໍ້ຄົງຄ້າງ, ສາເຫດ ແລະ ທິດທາງຈຸດສຸມຂອງຕົນໃນປີ 2018 ເພື່ອເຮັດແກ້ໄຂບັນຫາປະກົດການຫຍໍ້ທໍ້ໃນສັງຄົມໃຫ້ຫຼຸດໜ້ອຍຖອຍລົງ( ຂ່າວ ປກສ, 2018). ດັ່ງນັ້ນ, ເຮົາເຫັນໄດ້ເຖິງບັນຫາທີ່ເກີດຂຶ້ນໃນ ສປປ ລາວ ກໍ່ຄືບັນດາປະກົດການຫຍໍ້ທໍ້ໃນສັງຄົມ ຫຼື ອາຊະຍາກຳປະເພດຕ່າງໆທີ່ເກີດຂຶ້ນມີແນວໂນ້ມເພີ່ມຂຶ້ນ ແລະ ມີມູນຄ່າຜົນເສຍຫາຍຈຳນວນຫຼວງຫຼາຍ. ເຖິງແມ່ນວ່າ, ບາງກໍລະນີສາມາດແກ້ໄຂໄດ້ແຕ່ບາງກໍລະນີກໍ່ຍັງບໍ່ໄດ້ຮັບການແກ້ໄຂ ຈຶ່ງສົ່ງຜົນໃຫ້ບັນດາພາກສ່ວນທີ່ກ່ຽວຂ້ອງມີຄວາມຈຳເປັນຕ້ອງວາງແນວທາງນະໂຍບາຍ ແລະ ກຳນົດຫຼາກຫຼາຍວິທີເພື່ອແກ້ໄຂບັນຫາດັ່ງກ່າວ ເຊິ່ງການສຶກສາຫາສາເຫດຂອງບັນຫາການເກີດບັນຫາດັ່ງກ່າວຈຶ່ງມີຄວາມສຳຄັນໃນການແກ້ໄຂບັນຫາດັ່ງກ່າວເຊັ່ນດຽວກັນ. ເຫດຜົນຕ່າງໆທີ່ກ່າວມາຂ້າງເທິງນີ້ ເປັນຜົນເຮັດໃຫ້ຜູ້ສຶກສາມີຄວາມສົນໃຈລົງເລິກໃນການສຶກສາຜົນກະທົບຂອງການຫວ່າງງານຕໍ່ການກໍ່ໃຫ້ເກີດອາຊະຍາກຳໃນ ສປປ ລາວ.

**ຈຸດປະສົງຂອງການຄົ້ນຄວ້າ:** ສຶກສາສະພາບທົ່ວໄປຂອງການເກີດອາຊະຍາກຳໃນສປປ ລາວໄລຍະແຕ່ປີ 2013-2019 ແລະ ສຶກສາຜົນກະທົບຂອງການຫວ່າງງານແລະປັດໄຈອື່ນໆຕໍ່ການເກີດອາຊະຍາກຳໃນສປປ ລາວ.

**ປະໂຫຍດຄາດວ່າຈະໄດ້ຮັບ:** ໄດ້ຮູ້ເຖິງສະພາບທົ່ວໄປຂອງການເກີດອາຊະຍາກຳ ແລະ ປັດໄຈທີ່ມີຜົນຕໍ່ການເກີດອາຊະຍາກຳຢູ່ໃນ ສປປ ລາວ ແລະ ນຳໃຊ້ຜົນຂອງການຄົ້ນຄວ້າ ເຂົ້າໃນການກຳນົດແນວທາງ, ນະໂຍບາຍ ແລະ ວິທີແກ້ໄຂທີ່ມີປະໂຫຍດຕໍ່ກັບການແກ້ໄຂບັນຫາອາຊະຍາກຳໃຫ້ກັບບັນດາອົງກອນ, ກະຊວງປ້ອງກັນຄວາມສະຫງົບ ປະກອບທັງພາກລັດ ແລະ ອົງການທີ່ກ່ຽວຂ້ອງໃນການກຳນົດທິດທາງ ແລະ ຈັດຕັ້ງປະຕິບັດການແກ້ໄຂບັນຫາໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນ.

## ທົບທວນເອກະສານ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ

### ແນວຄວາມຄິດກ່ຽວກັບອາຊະຍາກຳ

**ທັດສະນະຂອງນັກກົດໝາຍ:** ຕາມທັດສະນະ ຫຼື ແນວຄວາມຄິດຂອງນັກກົດໝາຍໄດ້ມີຄວາມເຫັນວ່າ: ອາຊະຍາກຳ ແມ່ນການປະພຶດທີ່ກົດໝາຍອາຍາຫ້າມ ແລະ ມີການກຳນົດໂທດໄວ້ ເຊິ່ງຖືວ່າເປັນການໃຫ້ຄວາມໝາຍກວ້າງແກ່ອາຊະຍາກຳ ແລະ ແນວຄິດນີ້ກົງກັບຄຳເວົ້າຂອງຊາວເກັຣກບູຮານທີ່ວ່າ: ຖ້າຫາກບໍ່ມີກົດ

ໝາຍກໍ່ບໍ່ມີການກະທຳຜິດ. ທັດສະນະຂອງນັກກົດໝາຍດັ່ງກ່າວນີ້ຖືວ່າ: ບຸກຄົນຜູ້ລະເມີດກົດໝາຍ ຫຼື ກົດໝາຍຫ້າມຈະຖືວ່າແມ່ນເປັນອາຊະຍາກອນທັງໝົດ.

**ທັດສະນະຂອງນັກກົດໝາຍລາວ:** ອາຊະຍາກຳແມ່ນການກະທຳຜິດກົດໝາຍໂດຍສະເພາະແມ່ນກົດໝາຍອາຍາທີ່ບັນຍັດຫ້າມຄົນກະທຳ ຫຼື ຫ້າມເມີນເສີຍ, ຖ້າບຸກຄົນຍັງກະທຳ ຫຼືເມີນເສີຍກໍ່ຈະເປັນການລະເມີດຂໍ້ຫ້າມຂອງກົດໝາຍ ຖືວ່າເປັນການກໍ່ອາຊະຍາກຳ, ແຕ່ກົງກັນຂ້າມຖ້າພຶດຕິກຳອັນໃດບໍ່ໄດ້ກຳນົດໄວ້ໃນກົດໝາຍຈະບໍ່ຖືວ່າການກໍ່ອາຊະຍາກຳ (ປຶ້ມກົດໝາຍວ່າດ້ວຍຄວາມຮູ້ເບື້ອງຕົ້ນກ່ຽວກັບອາຍາວິທະຍາ. (2009).

ຈາກຄວາມໝາຍຂອງຄຳວ່າ: ອາຊະຍາກຳ ທີ່ກ່າວມາທັງໝົດນັ້ນ ນັກອາຍາວິທະຍາໄດ້ສັງເກດທາງດ້ານນິຕິສາດ ແລະ ດ້ານສັງຄົມສາດ ດັ່ງນັ້ນ, ຈຶ່ງອາດກ່າວໂດຍສະຫຼຸບໄດ້ເຖິງຄວາມໝາຍຂອງອາຊະຍາກຳໃນແນວຄວາມຄິດປະຈຸບັນນີ້ວ່າມີອົງປະກອບມີ: ການກະທຳຄວາມຜິດໂດຍເຈດຕະນາ, ຄວາມຜິດນັ້ນມີລັກສະນະທີ່ຮ້າຍແຮງ ມີອັນຕະລາຍແກ່ສັງຄົມໂດຍທົ່ວໄປເປັນທີ່ຍອມຮັບຂອງສັງຄົມ ແລະ ກົດໝາຍຕ້ອງເຂົ້າມາດຳເນີນການຕໍ່ການກະທຳນັ້ນ ແລະ ການກະທຳທີ່ເປັນອາຊະຍາກຳຕ້ອງໄດ້ຮັບໂທດຈາກສະມາຊິກຂອງສັງຄົມ ແລະ ກົດໝາຍບ້ານເມືອງຢ່າງເປັນທາງການເຊິ່ງມີວິທີການ ແລະ ຂັ້ນຕອນໃນການດຳເນີນຄະດີ.

**ບົດບາດຂອງອາຊະຍາກຳ**

ກ. ອາຊະຍາກຳກັບສັງຄົມ: ອາຊະຍາກຳເປັນສິ່ງທີ່ສັງຄົມບໍ່ຕ້ອງການ ແຕ່ອາຊະຍາກຳກໍ່ມີບົດບາດທີ່ສຳຄັນຕໍ່ກັບສັງຄົມຄື: ອາຊະຍາກຳເປັນເລື່ອງທີ່ກຳນົດຊົນຊັ້ນຂອງສັງຄົມ ເຊິ່ງກຳນົດໃຫ້ມີຊົນຊັ້ນຜູ້ດີ ແລະ ຜູ້ຮ້າຍ. ແຕ່ອາຊະຍາກຳກໍ່ຖືເປັນປັດໄຈໜຶ່ງຂອງສັງຄົມ ແລະ ເມື່ອສັງຄົມມີອາຊະຍາກຳກໍ່ຈຳເປັນຕ້ອງມີອາຊະຍາກອນ ກໍຄື ຜູ້ປະກອບອາຊະຍາກອນ ແລະ ຜົນຂອງການມີອາຊະຍາກອນເກີດຂຶ້ນຈຶ່ງກໍ່ໃຫ້ເກີດສະຖາບັນຕ່າງໆທາງສັງຄົມຂຶ້ນ ເພາະວ່າອາຊະຍາກອນບໍ່ແມ່ນເປັນແຕ່ຜູ້ປະກອບອາຊະຍາກຳເທົ່ານັ້ນ ແຕ່ເປັນຜູ້ສ້າງໃຫ້ມີກົດ ໝາຍອາຍາ ແລະ ຂະບວນການຍຸຕິທຳທາງອາຍາ.

ຂ. ອາຊະຍາກຳກັບກົດໝາຍ: ອາຊະຍາກຳຕາມຄວາມໝາຍຂອງກົດໝາຍແລ້ວແມ່ນ ການກະທຳຜິດຕໍ່ກົດໝາຍ ການກະທຳຜິດໃດກໍ່ຕາມຖືວ່າເປັນການປະກອບອາຊະຍາກຳທັງໝົດ. ເຊິ່ງຜູ້ກະທຳຜິດຈະຕ້ອງຕົກເປັນອາຊະຍາກອນ. ສະນັ້ນ, ກົດໝາຍຈຶ່ງມີການກຳນົດການກະທຳຄວາມຜິດ ຢ່າງຊັດເຈນເພື່ອຈະໄດ້ຮັບໂທດຕາມຄວາມເໝາະສົມ ເຊິ່ງກົດໝາຍອາຍາກໍ່ໄດ້ກຳນົດໂທດໄວ້ສອງສະຖານຄື: ໂທດເບົາ ແລະ ໂທດໜັກ.

ຄ. ອາຊະຍາກຳກັບສາສະໜາ: ສາສະໜາຖືວ່າເປັນສະຖາບັນທາງສັງຄົມທີ່ມີການຍຶດໝ່ຽວທາງດ້ານຈິດໃຈຄົນໃນສັງຄົມ ແລະ ສິ່ງເສີມໃຫ້ຄົນໃນສັງຄົມປະຕິບັດຕໍ່ກັນຢ່າງຖືກຕ້ອງຕາມຮີດຄອງປະເພນີເພື່ອຄວາມສະຫງົບສຸກໃນສັງຄົມ. ສະນັ້ນ, ອາຊະຍາກຳກັບສາສະໜາຈຶ່ງມີຄວາມສຳພັນກັນຢ່າງໃກ້ຊິດ ຈະເຫັນໄດ້ຈາກການປະກອບອາຊະຍາກຳມັກຈະເກີດຈາກການກະທຳຜິດສິນທຳຂໍ້ໃດຂໍ້ໜຶ່ງ ໄດ້ແກ່ການລັກຊັບ, ຊິງຊັບ, ຄາດຕະກຳ ແລະ ຂົ່ມຂືນກະທຳຊຳເລົາເປັນຕົ້ນ. ເຊິ່ງການປະກອບອາຊະຍາກຳດັ່ງກ່າວລ້ວນແຕ່ເກີດມາຈາກການກະທຳຄວາມຜິດສິນທຳທັງໝົດ.

ງ. ອາຊະຍາກຳກັບຂະນົບທຳນຽມປະເພນີ: ຂະນົບທຳນຽມປະເພນີ ຖືວ່າເປັນສິ່ງທີ່ປະຊາຊົນໃນສັງຄົມຖືປະຕິບັດສືບຕໍ່ເນື່ອງກັນມາ ແລະ ເປັນການຍຶດຖືໃຫ້ປະຊາຊົນໃນສັງຄົມເກີດຄວາມຮູ້ສຶກເປັນອັນໜຶ່ງອັນດຽວກັນ. ດັ່ງນັ້ນ, ເມື່ອບ້ານເມືອງເກີດມີການປ່ຽນແປງໄປ ຄວາມນຶກຄິດ ຄວາມເຊື່ອ ແລະ ການຍຶດຖືໃນຂະນົບທຳນຽມປະເພນີຂອງຄົນໃນສັງຄົມກໍ່ປ່ຽນແປງໄປຕາມຄວາມເໝາະສົມກັບສະພາບ ແລະ ເຫດການ ແລະ ສິ່ງແວດລ້ອມອ້ອມຕົວນັ້ນດ້ວຍ. ເຖິງຢ່າງໃດກໍ່ຕາມ, ຂະນົບທຳນຽມປະເພນີນັບວ່າມີບົດບາດຕໍ່ການຄວບຄຸມສັງຄົມເປັນຢ່າງຍິ່ງ.

ຈ. ອາຊະຍາກຳກັບສິນລະທຳ: ສິນລະທຳ ໝາຍເຖິງລະບຽບປະຕິບັດທີ່ເຮັດໃຫ້ຄົນເປັນຄົນດີ, ມີສິນ, ມີສັດຈະ ແລະ ມີຄວາມຮູ້ບຸນຄຸນ ເຊິ່ງຢູ່ໃນສ່ວນເລິກຂອງຈິດໃຈຄົນ ແລະ ເປັນການຍາກທີ່ຈະສະແດງອອກໃຫ້ເຫັນ. (ພຶດຕິກຳທີ່ສະແດງອອກທາງກາຍ, ວາຈາ ແລະ ໃຈ). ສະນັ້ນ, ເປັນອັນຕະລາຍຢ່າງຍິ່ງທີ່ຈະນຳຫຼັກສິນລະທຳໃນຈິດໃຈຂອງແຕ່ລະຄົນມາຕັດສິນພຶດຕິກຳຂອງຄົນອື່ນວ່າ: ດີ ຫຼື ຊົ່ວ ໂດຍເຫດຜົນນີ້ກົດໝາຍຈຶ່ງເຂົ້າມາມີບົດບາດສຳຄັນໃນສັງຄົມ ໂດຍເປັນຕົວກຳນົດປະຕິບັດຕໍ່ກັນ.

ສ. ອາຊະຍາກຳກັບການກະທຳຜິດຂອງເດັກທີ່ມີອາຍຸຕ່ຳກວ່າ 18 ປີ : ປະຈຸບັນເດັກນ້ອຍ ແລະ ເຍົາວະຊົນ ກະທຳຄວາມຜິດເພີ່ມຂຶ້ນເປັນຈຳນວນຫລາຍ ເຊິ່ງມັນສະແດງອອກໃນສັງຄົມປະຈຸບັນ. ສະນັ້ນ, ກົດໝາຍຈຶ່ງເຂົ້າມາມີບົດບາດໃນການກຳນົດໂທດໃສ່ຜູ້ກະທຳຄວາມຜິດ, ເຊິ່ງມີການກຳນົດຄື ຖ້າເດັກນ້ອຍອາຍຸຕ່ຳກວ່າ 15 ປີ ຕ້ອງໄດ້ໂທດ ຫຼື ບໍ່ ແລະ ຄວນມີການກຳນົດໂທດໃສ່ຜູ້ກະທຳຄວາມຜິດ ຫຼື ບໍ່.

**ບົດຄົ້ນຄວ້າທີ່ກ່ຽວຂ້ອງ**

PIEMPONGSAN, S. (2010). ສຶກສາປັດໄຈທີ່ກຳນົດອາຊະຍາກຳໃນ ປະເທດໄທ. ຈຸດປະສົງຂອງການສຶກສາຄື: ສຶກສາຄວາມສຳພັນລະຫວ່າງອັດຕາການເກີດອາຊະຍາກຳກັບຕົວປ່ຽນທາງເສດຖະກິດ, ສັງຄົມ ແລະ ກາຍຍະພາບຂອງປະເທດໄທ ແລະ ສຶກສາເຖິງປະສິດທິພາບໃນການປ້ອງກັນ ແລະ ປາບປາມອາຊະຍາກຳຂອງຕຳຫຼວດໃນມຸມມອງຂອງຕຳຫຼວດຄື: ສິນຄ້າສາທາລະນະສຳລັບການປ້ອງກັນ ແລະ ປາບປາມອາຊະຍາກຳ. ໃນການສຶກສາຄັ້ງນີ້ໄດ້ນຳໃຊ້ການວິເຄາະດ້ວຍວິທີ OLS (Ordinaly Least Squear) ເຂົ້າໃນການວິເຄາະເພື່ອສຶກສາຫາປັດໄຈຕ່າງໆທີ່ມີຜົນຕໍ່ການເກີດອາຊະຍາກຳໃນປະເທດໄທ ແລະ ນຳໃຊ້ຂໍ້ມູນຕັດຂວາງ (Panel Data) ລະດັບແຂວງລວມທັງໝົດ 77 ແຂວງໃນປະເທດໄທ ລະຫວ່າງປີ 1999-2008. ຕົວປ່ຽນຕ່າງໆທີ່ໃຊ້ໃນການສຶກສາມີຄື: ຕົວປ່ຽນຕາມແມ່ນອັດຕາການເກີດອາຊະຍາກຳ (R) ແລະ ຕົວປ່ຽນອິດສະຫຼະມີຄື: ຜະລິດຕະພັນຂອງແຂວງຕໍ່ປະຊາກອນ (GPP), ອັດຕາການຫວ່າງງານ (Uem), ຈຳນວນໂຮງງານອຸດສາຫະກຳຕໍ່ເນື້ອທີ່ (Factory), ສັດສ່ວນຂອງແຮງງານທີ່ມີລະດັບການສຶກສາຊັ້ນມັດທະຍົມຕອນປາຍ ຫຼື ທຽບເທົ່າຕໍ່ກຳລັງແຮງງານໃນແຂວງ (Edu), ຄ່າຈ້າງຂັ້ນຕ່ຳ (wage), ສັດສ່ວນຂອງແຮງງານຕ່າງດ້າວຕໍ່ກຳລັງແຮງງານໃນແຂວງ (Out), ສັດສ່ວນຂອງຜູ້ປະກັນຕົວໃນກອງທຶນປະກັນສັງຄົມຕໍ່ກຳລັງແຮງງານໃນແຂວງ (Safetynet), ຄວາມໜາ ແໜ້ນຂອງປະຊາກອນຕໍ່ເນື້ອທີ່ (Den), ສັດສ່ວນຂອງການຖືກຈັບໄດ້ຕໍ່ການແຈ້ງຄະດີອາຊະຍາກຳທັງໝົດ (P') ແລະ ອັດຕາການເກີດອາຊະຍາກຳສະເລ່ຍໃນແຂວງໃກ້ຄຽງທີ່ມີຊາຍແດນຕິດກັນ (SpillO). ຜົນການສຶກສາພົບວ່າ ລັກສະນະທາງກາຍຍະພາບຂອງພື້ນທີ່ ໂດຍພິຈາລະນາຈາກຈຳນວນໂຮງງານອຸດສາຫະກຳຕໍ່ເນື້ອທີ່ ແລະ ອັດຕາການເກີດອາຊະຍາກຳຂອງແຂວງທີ່ມີຊາຍແດນຕິດຕໍ່ກັນມີຜົນກະທົບຕໍ່ອັດຕາການເກີດອາຊະຍາກຳໃນແຂວງກໍ່ຄືຈະເຮັດໃຫ້ອັດຕາການກໍ່ອາຊະຍາກຳເພີ່ມຂຶ້ນ, ສຳລັບສັດສ່ວນຂອງແຮງງານທີ່ມີລະດັບການສຶກສາຂັ້ນມັດທະຍົມຕອນປາຍ ຫຼື ທຽບເທົ່າຕໍ່ກຳລັງແຮງງານໃນແຂວງສິ່ງຜົນສະທ້ອນໃຫ້ເຫັນສັດສ່ວນຂອງຜູ້ມີຕົ້ນທຶນໃນການກໍ່ອາຊະຍາກຳສູງມີການພົວພັນໃນທາງລົບ ຫຼື ອັດຕາການກໍ່ອາຊະຍາກຳຫຼຸດລົງ, ຄວາມໜາແໜ້ນຂອງປະຊາກອນຕໍ່ພື້ນທີ່ຫຼຸດລົງຈະເຮັດໃຫ້ອັດຕາການກໍ່ອາຊະຍາກຳເພີ່ມຂຶ້ນ, ສັດສ່ວນຂອງແຮງງານຕ່າງດ້າວໃນບັນດາແຂວງນັ້ນໆເພີ່ມຂຶ້ນຈະມີຜົນກະທົບເຮັດໃຫ້ອັດຕາການເກີດອາຊະຍາກຳເພີ່ມຂຶ້ນ, ຖ້າຫາກຜະລິດຕະພັນມວນລວມຂອງແຂວງຕໍ່ຫົວຄົນ ແລະ ການຄວບຄຸມຂອງການມີຫຼັກປະກັນສັງຄົມເພີ່ມຂຶ້ນຈະເຮັດໃຫ້ອັດຕາການກໍ່ອາຊະຍາກຳເພີ່ມຂຶ້ນ, ຖ້າຫາກການປ້ອງກັນ ແລະ ປາບປາມອາຊະຍາກຳຂອງຕຳຫຼວດເພີ່ມຂຶ້ນຈະເຮັດໃຫ້ອັດຕາການເກີດອາຊະຍາກຳຫຼຸດລົງ ແລະ ສັດສ່ວນຂອງການຈັບໄດ້ຕໍ່ການແຈ້ງຄະດີທັງໝົດເພີ່ມຂຶ້ນຈະເຮັດໃຫ້ອັດຕາການກໍ່ອາຊະຍາກຳຫຼຸດລົງ.

Khan, K., Ahmed, J.,Nawaz, M.,& Zaman, K. (2015). ສຶກສາປັດໄຈທີ່ກຳນົດເສດຖະກິດ ແລະ ສັງຄົມ ຂອງອາຊະຍາກຳໃນປະເທດປາກິດສະຖານ. ຈຸດປະສົງຫຼັກຂອງການສຶກສາຄື: ທົດສອບຄວາມສຳພັນຂອງປັດໄຈ ຫຼື ຕົວປ່ຽນທາງເສດຖະກິດສັງຄົມທີ່ເຮັດ

ໃຫ້ມີການເພີ່ມຂຶ້ນ ແລະ ຫຼຸດລົງຂອງອັດຕາການກໍ່ອາຊະຍາກຳໃນປະເທດປາກິດສະຖານໃນແບບຈຳລອງປະກອບດ້ວຍຕົວປ່ຽນຕາມດັ່ງນີ້:

ອັດຕາການຫວ່າງງານ (UN), ສ່ວນຮ້ອຍຂອງອັດຕາຄວາມທຸກຍາກ (POV), GDP ຕໍ່ຫົວຄົນ (GDPPC) ແລະ ອັດຕາການລົງທະບຽນລະດັບມັດທະຍົມສຶກສາ (HE). ຜົນການສຶກສາພົບວ່າ ອັດຕາການຫວ່າງງານມີການພົວພັນກັບອັດຕາການກໍ່ອາຊະຍາກຳໃນທາງບວກທັງໃນໄລຍະສັ້ນ ແລະ ໃນໄລຍະຍາວ, ອັດຕາການລົງທະບຽນລະດັບມັດທະຍົມສຶກສາກັບອັດຕາການກໍ່ອາຊະຍາກຳມີການພົວພັນກັນໃນທິດທາງລົບ ທັງໃນໄລຍະ

ສັ້ນ ແລະ ໄລຍະຍາວ, GDP ຕໍ່ຫົວຄົນກັບອັດຕາອາຊະຍາກຳມີການພົວພັນກັນໃນທິດທາງບວກໃນໄລຍະຍາວ ແລະ ມີການພົວພັນກັນທິດທາງລົບໃນໄລຍະສັ້ນ, ອັດຕາຄວາມທຸກຍາກມີການພົວພັນກັບອັດຕາອາຊະຍາກຳໃນທິດທາງລົບໃນໄລຍະສັ້ນ ແຕ່ມີການພົວພັນໃນທິດທາງບວກໃນໄລຍະຍາວ.

**ກອບແນວຄວາມຄິດ**




**ວິທີດຳເນີນການຄົ້ນຄວ້າ**

ການຄົ້ນຄວ້າຄັ້ງນີ້ແບ່ງອອກເປັນ 2 ພາກສ່ວນຕາມຈຸດປະສົງຂອງການສຶກສາຄື: ພາກສ່ວນທຳອິດສຶກສາສະພາບທົ່ວໄປຂອງການກໍ່ອາຊະຍາກຳໃນ ສປປ ລາວ ໂດຍນຳໃຊ້ວິທີວິເຄາະແບບພັນລະນາ (Descriptive Analysis) ແລະ ພາກສ່ວນທີສອງສຶກສາຜົນກະທົບຂອງການຫວ່າງງານຕໍ່ການກໍ່ໃຫ້ ເກີດອາຊະຍາກຳ ໃນ ສປປ ລາວ ໂດຍນຳໃຊ້ວິທີການວິເຄາະແບບປະລິມານ (Quantitative Analysis) ດ້ວຍວິທີການທາງເສດຖາມິຕິເພື່ອທົດສອບຄວາມສຳພັນລະຫວ່າງຕົວປ່ຽນຕາມ ແລະ ບັນດາຕົວປ່ຽນອິດສະຫຼະ. ຂໍ້ມູນທີ່ໃຊ້ໃນການສຶກສາຄົ້ນຄວ້າເປັນຂໍ້ມູນທາງດ້ານປະລິມານທີ່ໄດ້ຈາກການຮວບຮວມຈາກສູນສະຖິຕິແຫ່ງຊາດ) ທີ່ໄດ້ຈາກບົດລາຍງານຜົນການສຳຫຼວດກຳລັງແຮງງານຄັ້ງທີ II ໃນ ສປປ ລາວ ປີ 2017 (Lao Labor force Survey 2017), ກົມໃຫຍ່ຕຳຫຼວດ ກະຊວງປ້ອງກັນຄວາມສະຫງົບ 2013-2019 ແລະ ກະຊວງແຜນການ ແລະ ການລົງທຶນ ໃນປີ 2017 ເຊິ່ງປະກອບດ້ວຍການວິເຄາະແບບພັນລະນາ ແລະ ການວິເຄາະແບບປະລິມານ.

**ສະພາບລວມຂອງການເກີດອາຊະຍາກຳໃນ ສປປ ລາວ ນັບຕັ້ງແຕ່ສົກປີ 2013-2019**

ການກໍ່ອາຊະຍາກຳໃນ ສປປ ລາວ ມີແນວໂນ້ມເພີ່ມຂຶ້ນເລື້ອຍໆໃນແຕ່ລະປີ ຄື: ປີ 2013 ມີຄະດີອາຊະຍາກຳເກີດຂຶ້ນທັງໝົດ 3,385 ຄັ້ງ, ປີ 2014 ມີອາຊະຍາກຳເກີດຂຶ້ນທັງໝົດ 3,959 ຄັ້ງ ທຽບໃສ່ປີ 2013 ເພີ່ມຂຶ້ນ 16.95 ສ່ວນຮ້ອຍ, ປີ 2015 ມີຄະດີເກີດຂຶ້ນທັງໝົດ 5,147 ຄັ້ງ ທຽບໃສ່ປີ 2014 ເພີ່ມຂຶ້ນ 30 ສ່ວນຮ້ອຍ, ປີ 2016 ມີອາຊະຍາກຳເກີດຂຶ້ນທັງໝົດ 5,066 ຄັ້ງ ທຽບໃສ່ປີ 2015 ຫຼຸດລົງ 1.5 ສ່ວນຮ້ອຍ, ໃນປີ 2017 ມີຄະດີເກີດຂຶ້ນທັງໝົດ 5,136 ຄັ້ງ ເພີ່ມຂຶ້ນ 1.3 ສ່ວນຮ້ອຍ ທຽບໃສ່ປີ 2016, ໃນປີ 2018 ມີຄະດີເກີດຂຶ້ນທັງໝົດ 6,171 ຄັ້ງ ເພີ່ມຂຶ້ນ 20.15 ສ່ວນຮ້ອຍ ທຽບໃສ່ປີ 2017.

**ຜົນຂອງການວິເຄາະຂໍ້ມູນ ແລະ ການອະທິບາຍຜົນ**

ໃນປີ 2019 ມີຄະດີເກີດຂຶ້ນທັງ ໝົດ 5,820 ຄັ້ງ ຫຼຸດລົງ 5.6 ສ່ວນຮ້ອຍ ທຽບໃສ່ປີ 2018. ເຊິ່ງຕົວເລກຈຳນວນອາຊະຍາກຳທີ່ເກີດຂຶ້ນທັງໝົດແມ່ນໄດ້ລວມເອົາອາຊະຍາກຳຫຼາຍປະເພດຄື: ລັກຊັບພົນລະເມືອງ, ທຳຮ້າຍຮ່າງກາຍ, ປອມແປງເອກະສານ, ຄາດຕະກຳ, ພະຍາຍາມຄາດຕະກຳ, ຊື້ຂາຍຊັບຜິດກົດໝາຍ, ສໍ້ໂກງຊັບພົນລະເມືອງ, ຈັບຕົວປະກັນ, ລັກພາຕົວ, ຍັກຍອກຊັບຂອງລັດ, ມີອາວຸດໄວ້ໃນຄອບຄອງ,ຂົ່ມຂືນກະທຳຊຳເລົາ, ທຳມິດສະຖານ, ເຮັດໃຫ້ຜູ້ອື່ນເສຍຊີວິດ, ມີລັກຊັບລວມໝູ່, ກໍ່ອາລະວາດຕີກັນ, ເຮັດໃຫ້ຜູ້ອື່ນໄດ້ຮັບບາດເຈັບດ້ວຍຄວາມບໍ່ລະມັດລະວັງ, ລ່ວງລະເມີດເຄຫະສະຖານ, ທຳລາຍວັດຖຸບູຮານ, ປົດບັງການກະທຳຜິດ ແລະອື່ນໆ. ຈາກການລາຍງານຂອງເຈົ້າໜ້າທີ່ຕຳຫຼວດສາມາດສະຫຼຸບໄດ້ວ່າ ຜູ້ທີ່ກໍ່ອາຊະຍາກຳສ່ວນຫຼາຍແມ່ນເປັນຜູ້ທີ່ບໍ່ມີວຽກເຮັດງານທຳ, ຜູ້ທີ່ເສບຢາເສບຕິດ, ຕິດການພະນັນ ແລະ ໂດຍສະເພາະແມ່ນຜູ້ທີ່ອາໄສຢູ່ໃນຕົວເມືອງໃນນະຄອນຫຼວງວຽງຈັນເປັນຕົ້ນ.

**ສະພາບລວມຂອງການຫວ່າງງານໃນ ສປປ ລາວ ປີ 2017**

ຈາກຂໍ້ມູນການສຳຫຼວດແຮງງານໃນປີ 2017 ສາມາດສະຫຼຸບໄດ້ດັ່ງນີ້: ໃນ ສປປ ລາວ ມີການຫວ່າງງານລວມທັງໝົດ 9.41 ສ່ວນຮ້ອຍ ເຊິ່ງແບ່ງອອກເປັນແຕ່ລະແຂວງດັ່ງນີ້: ໃນນະຄອນຫຼວງວຽງຈັນມີການຫວ່າງງານ 0.0326 ສ່ວນຮ້ອຍ, ຜົ້ງສາລີ 0.0393 ສ່ວນຮ້ອຍ, ຫຼວງນໍ້າທາ 0.0624 ສ່ວນຮ້ອຍ, ອຸດົມໄຊ 0.0556 ສ່ວນຮ້ອຍ, ບໍ່ແກ້ວ 0.0529 ສ່ວນຮ້ອຍ, ຫຼວງພະບາງ 0.0515 ສ່ວນຮ້ອຍ, ຫົວພັນ 0.0690 ສ່ວນຮ້ອຍ, ໄຊຍະບູລີ 0.0317 ສ່ວນຮ້ອຍ, ຊຽງຂວາງ 0.0361 ສ່ວນຮ້ອຍ, ວຽງຈັນ 0.0561 ສ່ວນຮ້ອຍ, ບໍລິຄຳໄຊ 0.0527 ສ່ວນຮ້ອຍ, ຄຳມ່ວນ 0.0618 ສ່ວນຮ້ອຍ, ສະຫວັນນະເຂດ 0.0845 ສ່ວນຮ້ອຍ, ຈຳປາສັກ 0.0497 ສ່ວນຮ້ອຍ, ສາລະວັນ 0.0732 ສ່ວນຮ້ອຍ, ເຊກອງ 0.0490 ສ່ວນຮ້ອຍ, ອັດຕະປື 0.0538 ສ່ວນຮ້ອຍ, ໄຊສົມບູນ 0.0566 ສ່ວນຮ້ອຍ. ເຊິ່ງແຂວງທີ່ມີການຫວ່າງງານສູງທີ່ສຸດແມ່ນແຂວງສະຫວັນນະເຂດ ແລະ ແຂວງທີ່ມີການຫວ່າງງານຕໍ່າສຸດແມ່ນແຂວງໄຊຍະບູລີ.

ຈາກຜົນຄຳນວນຈຳນວນຂໍ້ມູນ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ, ຄ່າຕໍ່າສຸດ ແລະ ຄ່າສູງສຸດຈາກຕາຕະລາງ 4.1 ສະແດງໃຫ້ເຫັນວ່າ: ຈຳນວນການກໍ່ອາຊະຍາກຳ (crime), ການຫວ່າງງານ (unemp), ຈຳນວນເຈົ້າໜ້າທີ່ຕຳຫຼວດທີ່ເຮັດວຽກກ່ຽວກັບການສະກັດກັ້ນ ແລະ ຕ້ານການເກີດອາຊະຍາກຳ (policer), ຄວາມໜາແໜ້ນຂອງປະຊາກອນ (density), ຈຳນວນຫົວໜ່ວຍທຸລະກິດ (SME), ລະດັບການສຶກສາຂອງພົນລະເມືອງ (edu), ລາຍໄດ້ຂອງຄົວເຮືອນ (hhinc) ແລະ ພົນລະເມືອງທີ່ອາໄສຢູ່ໃນຕົວເມືອງ (urban) ມີຂໍ້ມູນທັງໝົດ 147 ຂໍ້ມູນທົ່ວປະເທດ. ອັດຕາການກໍ່ອາຊະຍາກຳ ມີຄ່າສະເລ່ຍ 2.001382 ຄັ້ງ/1000 ຄົນ, ຄ່າຕໍ່າສຸດແມ່ນ 0 ເຊິ່ງແມ່ນເມືອງແກ່ນທ້າວ ແຂວງ ໄຊຍະບູລີ ແລະ ເມືອງທ່າປາງທອງ ແຂວງ ສະຫວັນນະເຂດ ແລະ ຄ່າສູງສຸດແມ່ນ 8.345883 ແມ່ນເມືອງຕົ້ນເຜິ້ງ ແຂວງ ບໍ່ແກ້ວ, ການຫວ່າງງານມີຄ່າສະເລ່ຍ 0.0472737 ສ່ວນຮ້ອຍ, ຄ່າຕໍ່າສຸດແມ່ນ 0.0006891 ສ່ວນຮ້ອຍ ເຊິ່ງແມ່ນເມືອງ ວຽງທອງ ແຂວງ ຫົວພັນ, ຄ່າສູງສຸດແມ່ນ 1.834783 ສ່ວນຮ້ອຍ ເຊິ່ງແມ່ນເມືອງອະນຸວົງ ແຂວງ ໄຊສົມບູນ, ຈຳນວນເຈົ້າໜ້າທີ່ຕຳຫຼວດມີຄ່າສະເລ່ຍເທົ່າກັບ 15.925 ຄົນ, ຄ່າຕໍ່າສຸດແມ່ນ 6 ຄົນ ເຊິ່ງແມ່ນ ເມືອງ ໜອງບົກ ແຂວງ ຄຳມ່ວນ ແລະ ຄ່າສູງສຸດແມ່ນ 28 ຄົນ ເຊິ່ງແມ່ນເມືອງ ວຽງທອງ ແຂວງ ບໍລິຄຳໄຊ, ຄວາມໜາແໜ້ນຂອງປະຊາກອນມີຄ່າສະເລ່ຍແມ່ນ 512.12 ຄົນ/$km^2$, ຄ່າຕໍ່າສຸດແມ່ນ 0 ຄົນ/ $km^2$ ເຊິ່ງເປັນເມືອງ ລ້ອງຊານ ແຂວງ ໄຊສົມບູນ, ແລະ ຄ່າສູງສຸດແມ່ນ 60,378 ຄົນ/$km^2$ ແມ່ນເມືອງ ໃໝ່ ແຂວງ ຜົ້ງສາລີ, ຈຳນວນຫົວ ໜ່ວຍທຸລະກິດມີຄ່າສະເລ່ຍແມ່ນ 558.44 ຫົວໜ່ວຍທຸລະກິດ, ຄ່າຕໍ່າສຸດແມ່ນ 89 ຫົວໜ່ວຍທຸລະກິດ ເຊິ່ງແມ່ນເມືອງສິບເບົາ ແຂວງ ຫົວພັນ ແລະ ຄ່າສູງສຸດແມ່ນ 2,647 ຫົວໜ່ວຍທຸລະ

ກິດ ເຊິ່ງແມ່ນ ນະຄອນຫຼວງພະບາງ ແຂວງ ຫຼວງພະບາງ, ລະດັບການສຶກສາຂອງພົນ ລະເມືອງມີຄ່າສະເລ່ຍເທົ່າກັບ 16.53 ປີ, ຄ່າຕໍ່າສຸດແມ່ນ 4.786 ປີ ເຊິ່ງແມ່ນເມືອງ ຕຸ້ມລານ ແຂວງສາລະວັນ ແລະ ຄ່າສູງສຸດແມ່ນ 30.64 ປີ ເຊິ່ງແມ່ນ ເມືອງ ວຽງຄຳ ແຂວງ ວຽງຈັນ, ລາຍໄດ້ຂອງຄົວເຮືອນມີຄ່າສະເລ່ຍເທົ່າກັບ 1.562 ແສນກີບ/ເດືອນ, ຄ່າຕໍ່າສຸດແມ່ນ 0.065 ແສນກີບ/ເດືອນ ເຊິ່ງແມ່ນເມືອງ ກະລຶມ ແຂວງ ເຊກອງ ແລະ ຄ່າສູງສຸດແມ່ນ 15.499 ແສນກີບ/ເດືອນ ເຊິ່ງແມ່ນເມືອງວຽງຄຳ ແຂວງ ວຽງຈັນ, ຈຳນວນພົນລະເມືອງທີ່ຢູ່ອາໄສຢູ່ໃນຕົວເມືອງມີຄ່າສະເລ່ຍເທົ່າກັບ 41.6%, ຄ່ານ້ອຍສຸດແມ່ນ 0 ໝາຍເຖິງພົນລະເມືອງທີ່ອາໄສຢູ່ໃນຊົນນະບົດ ແລະ ຄ່າໃຫຍ່ສຸດແມ່ນ 1 ໝາຍເຖິງພົນລະເມືອງທີ່ອາໄສຢູ່ໃນຕົວເມືອງ.

**ການຫວ່າງງານ ແລະ ປັດໄຈອື່ນໆທີ່ສົ່ງຜົນໃຫ້ເກີດການກໍ່ອາຊະຍາກຳ**

**ການທົດສອບບັນຫາພະຫຸສຳພັນ (Multicollinearity)**

ຈາກການກວດເບິ່ງບັນດາຄ່າສະຖິຕິພັນລະນາຕ່າງໆຂ້າງເທິງແລ້ວ ກ່ອນທີ່ຈະນຳເອົາບັນດາຕົວປ່ຽນດັ່ງກ່າວໄປຄາດຄະເນນັ້ນ ເຮົາຕ້ອງໄດ້ກວດສອບບັນຫາພະຫຸສຳພັນ (Multicollinearity) ເພື່ອເບິ່ງວ່າຕົວປ່ຽນອິດສະຫຼະນັ້ນມີການພົວພັນກັນສູງບໍ່, ເພາະຖ້າຫາກມີການພົວພັນກັນສູງຈະເຮັດໃຫ້ການຄາດປະມານນັ້ນມີການບິດເບືອນ, ເຮັດໃຫ້ຄ່າພາລາມິເຕີ້ຄາດປະມານບໍ່ຖືກ

ຕາມທິດສະດີ, ຜົນຄາດປະມານຈາກແບບຈຳລອງບໍ່ຖືກຕ້ອງ ແລະ ຂາດຄວາມໜ້າເຊື່ອຖືໃນການນຳໃຊ້ຕໍ່ການຄາດປະມານ. ສະນັ້ນ, ເຮົາຈຳເປັນຕ້ອງກວດສອບບັນຫາພະຫຸສຳພັນກ່ອນ ໂດຍນຳໃຊ້ວິທີ Correlation Matrix. ຈາກຕາຕະລາງສາມາດສະຫຼຸບໄດ້ວ່າ ຄ່າການພົວພັນລະຫວ່າງຕົວປ່ຽນອິດສະຫຼະທີ່ມີການພົວພັນກັນສູງແມ່ນຕົວປ່ຽນ ລະດັບການສຶກສາ ແລະ ລາຍໄດ້ຂອງຄົວເຮືອນເຊິ່ງມີຄ່າເທົ່າກັບ 0.5241 ແຕ່ເຖິງຢ່າງໃດກໍ່ຕາມ ການພົວພັນຂອງບັນດາຕົວປ່ຽນອິດສະຫຼະ ບໍ່ມີການພົວພັນກັນເອງໃນທິດທາງທີ່ສູງຫຼາຍ (ຄ່າພາຣາມິເຕີສູງກວ່າ 0.8 ) ( Grewal ພ້ອມດ້ວຍຄະນະ, 2004). ດັ່ງນັ້ນ, ຈຶ່ງສະແດງໃຫ້ເຫັນວ່າ ບັນດາຕົວປ່ຽນຕ່າງໆບໍ່ເກີດບັນຫາພະຫຸສຳພັນໃນແບບຈຳລອງນີ້. ດັ່ງນັ້ນ, ຈຶ່ງສາມາດສ້າງເປັນສົມຜົນຄາດປະມານດ້ວຍແບບຈຳລອງສົມຜົນການປະມານຄ່າກຳລັງສອງນ້ອຍສຸດ (Ordinary Least Square: OLS). ໃນການນຳໃຊ້ສົມຜົນການຄາດປະມານຄ່າກຳລັງສອງນ້ອຍສຸດ (Ordinary Least Square: OLS) ນອກ ຈາກການກວດສອບບັນຫາພະຫຸສຳພັນແລ້ວ ຈຳເປັນຕ້ອງໄດ້ມີການກວດສອບບັນຫາສະສຳພັນເນື່ອງຈາກເຮົາໄດ້ນຳໃຊ້ຂໍ້ມູນແບບຕັດຂວາງ ເຊິ່ງບັນຫາທີ່ເກີດຂຶ້ນເວລາທີ່ມີບັນຫາສະຫະສຳພັນຈະສົ່ງຜົນເຮັດໃຫ້ຄ່າຜັນປ່ຽນຂອງສົມຜົນຖົດຖອຍບໍ່ຄົງທີ່ ແລະ ສົ່ງຜົນຕໍ່ກັບການຄິດໄລ່ຄ່າຜັນປ່ຽນມາດຕະຖານຂອງສຳປະສິດຂອງປ່ຽນແຕ່ລະຕົວ ເມື່ອເວລາຄ່າຜັນປ່ຽນມາດຕະຖານມີບັນຫາການໃຊ້ຄ່າສະຖິຕິທີ່ເປັນ T-test ແລະ F-test ຈະບໍ່ເປັນປົກກະຕິ. ສະນັ້ນ, ຫວ່າງເຊື່ອໝັ້ນ ແລະ ການທົດສອບຄ່າສົມມຸດຖານຈະບໍ່ໜ້າເຊື່ອຖືເຮັດໃຫ້ການໃຊ້ສົມຜົນຄາດປະມານກຳລັງສອງນ້ອຍສຸດ ຫຼື OLS ບໍ່ມີປະສິດທິພາບ (Inefficiency) ແລະ OLS ຈະບໍ່ແມ່ນການຄາດປະມານທີ່ດີທີ່ສຸດ (BLUE). ຈາກການທົດສອບໂດຍນຳໃຊ້ວິທີ Breusch-pagan /Cook - Weisberg test ຈາກຜົນການຄຳນວນເຫັນວ່າ Prob > chi2=0.09
ສະແດງວ່າເກີດບັນຫາ Heteroskedasticity ເຊິ່ງສະແດງໃຫ້ເຫັນດັ່ງຮູບຕໍ່ໄປນີ້:

ການກວດສອບບັນຫາ Heteroskedasticity

| ການກວດສອບບັນຫາ Heteroskedasticity | |
|---|---|
| Chi2(1) | 2.86 |
| Prob > Chi2 | 0.908 |

## ການແກ້ໄຂບັນຫາ Heteroskedasticity

ເນື່ອງຈາກພົບວ່າສົມຜົນມີບັນຫາສະຫະສຳພັນ ດັ່ງນັ້ນຕ້ອງມີການແກ້ໄຂເພື່ອໃຫ້ສົມຜົນມີປະສິດທິພາບດ້ວຍການນຳໃຊ້ວິທີການແກ້ໄຂຄ່າຜັນປ່ຽນມາດຕະຖານທີ່ຄຳນວນຈາກ OLS ( Heteroskedasticity-robust standard error ). ການຄາດປະມານການຫວ່າງງານ ແລະ ປັດໄຈອື່ນໆທີ່ສົ່ງຜົນຕໍ່ການເກີດອາຊະຍາກຳໃນການຄາດປະມານຜົນກະທົບຂອງການຫວ່າງງານ ແລະ ປັດໄຈທີ່ສົ່ງຜົນຕໍ່ການກໍ່ອາຊະຍາກຳດ້ວຍຮູບແບບສົມຜົນການຄາດປະມານຄ່າກຳລັງສອງນ້ອຍສຸດ (ordinary Least Square: OLS) ເຫັນວ່າ ຈຳນວນຂໍ້ມູນມີ 122 ຂໍ້ມູນ, Prob > F = 0.0000 ສະແດງໃຫ້ເຫັນວ່າສົມຜົນທີ່ໄດ້ຈາການຄາດປະມານນີ້ມີຄວາມສຳຄັນທາງສະຖິຕິ 1 ສ່ວນຮ້ອຍ. ນອກຈາກນັ້ນ, ຍັງເຫັນໄດ້ວ່າຕົວປ່ຽນອິດສະຫຼະສາມາດອະທິບາຍຕົວປ່ຽນຕາມໄດ້ 11.05 ສ່ວນຮ້ອຍ. ໃນການຄາດປະມານດ້ວຍຮູບແບບສົມຜົນການຄາດປະມານຄ່າກຳລັງສອງນ້ອຍສຸດ (ordinary Least Square: OLS) ແມ່ນສາມາດອະທິບາຍການພົວພັນກັບຕົວປ່ຽນຕາມໄດ້ດັ່ງນີ້:

ການຄາດປະມານດ້ວຍຮູບແບບສົມຜົນການຄາດປະມານຄ່າກຳລັງສອງນ້ອຍສຸດ (OLS)

| **ຕົວປ່ຽນ** | **ຄ່າສຳປະສິດ** | **Robust Std.Err** | **ຄ່າທົດສອບ t-test** | **ຄ່າຄວາມສຳພັນ P>ItI** |
|---|---|---|---|---|
| Constant | 1.534558* | 0.7774866 | 1.97 | 0.051 |
| Unemp | 29.93748 | 37.25793 | 0.80 | 0.423 |
| Policer | -0.091637 | 0.027936 | -0.33 | 0.743 |
| Density | 0.0003635* | 0.0002163 | 1.68 | 0.096 |
| Sme | 0.000578* | 0.0003114 | 1.86 | 0.066 |
| Edu | -0.00111222 | 0.0372118 | -0.03 | 0.976 |
| Hh-inc | 0.177581*** | 0.0597581 | 2.97 | 0.004 |
| Urban | -0.5450768* | 0.2875535 | -1.90 | 0.061 |
| ຈຳນວນຂໍ້ມູນ | 122 | | | |
| Prob > F | 0.0000 | | | |
| R-squared | 0.1105 | | | |

ໝາຍເຫດ: *** ມີຄວາມສຳຄັນທາງສະຖິຕິ 1%

** ມີຄວາມສຳຄັນທາງສະຖິຕິ 5%

* ມີຄວາມສຳຄັນທາງສະຖິຕິ 10%

**ການອະທິບາຍຜົນ**

ການຄາດປະມານຜົນກະທົບຂອງການຫວ່າງງານ ແລະ ປັດໄຈທີ່ສົ່ງຜົນຕໍ່ການກໍ່ອາຊະຍາກຳດ້ວຍຮູບແບບສົມຜົນການຄາດປະມານຄ່າກຳລັງສອງນ້ອຍສຸດ (Ordinary Least Square: OLS) ເຫັນວ່າ ຈຳນວນຂໍ້ມູນມີ 122 ຂໍ້ມູນ ເຊິ່ງສາມາດອະທິບາຍຕົວປ່ຽນຕາມ ແລະ ຕົວປ່ຽນອິດສະຫຼະໄດ້ດັ່ງນີ້:

ໃນກໍລະນີກຳນົດປັດໄຈຕ່າງໆຄົງທີ່ໝາຍຄວາມວ່າ ຖ້າປັດໄຈອື່ນໆຄົງທີ່ຈະມີການກໍ່ອາຊະຍາກຳເທົ່າກັບ 1.534558 ຄັ້ງ/1000ຄົນ ສະແດງໃຫ້ເຫັນວ່າຖ້າບໍ່ມີປັດ

ໄຈຕ່າງໆທີ່ກະທົບໃສ່ການກໍ່ອາຊະຍາກຳກໍ່ຈະມີການກໍ່ອາຊະຍາກຳເກີດຂຶ້ນ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 10%. ເນື່ອງຈາກ ການກໍ່ອາຊະຍາກຳບາງປະເພດເຊັ່ນ: ການຄາດຕະກຳ ບໍ່ໄດ້ຂຶ້ນກັບປັດໄຈທີ່ໄດ້ກຳນົດໄວ້ ອາດມາຈາກເຫດຜົນສ່ວນບຸກຄົນ ຫຼື ປັດໄຈທາງກາຍຍະພາບທີ່ບໍ່ສາມາດອະທິບາຍໄດ້ຢ່າງຖືກຕ້ອງຖີ່ຖ້ວນ.

ການຫວ່າງງານ (unemp) ມີການພົວພັນກັນໃນທິດທາງດຽວກັນກັບການເກີດອາຊະຍາກຳຄືກັບສົມມຸດຖານທີ່ຕັ້ງໄວ້ໃນເບື້ອງຕົ້ນ ໝາຍຄວາມວ່າ ເມື່ອການຫວ່າງງານເພີ່ມຂຶ້ນ 1 ສ່ວນຮ້ອຍ ຈະເຮັດໃຫ້ ໂອກາດການກໍ່ອາຊະຍາກຳເພີ່ມຂຶ້ນ 29.93748 ຄັ້ງ/1000ຄົນ ແຕ່ບໍ່ມີຄວາມສຳຄັນທາງສະຖິຕິ ເຊິ່ງກົງກັບບົດຄົ້ນຄວ້າເຊິ່ງກົງກັບບົດຄົ້ນຄວ້າຂອງ Nabeela ພ້ອມດ້ວຍຄະນະ (2015) ແລະ Stevn & Rudols (1998), Theerawan. (2016) ແລະ Dritsakis & Gkanas (2009) ໄດ້ເປັນໄປຕາມສົມມຸດຖານທີ່ຕັ້ງໄວ້ ເນື່ອງຈາກກຸ່ມຄົນທີ່ກໍ່ອາຊະຍາກຳອາດຈະບໍ່ໄດ້ຢູ່ໃນກຸ່ມຂອງຜູ້ທີ່ຫວ່າງງານ ແຕ່ເປັນກຸ່ມຄົນທີ່ເຄີຍກະທຳຜິດແລ້ວໄດ້ຮັບການປ່ອຍຕົວຈຶ່ງກະທຳຜິດຊ້ຳອີກໂດຍສະເພາະແມ່ນຜູ້ທີ່ພົວພັນກັບສິ່ງເສບຕິດ ແລະ ຕິດການພະນັນຕາມການລາຍງານຂອງເຈົ້າໜ້າທີ່ຕຳຫຼວດ ແລະ ຄຳໃຫ້ການຂອງນັກໂທດ ສ່ວນກຸ່ມຄົນທີ່ຫວ່າງງານສ່ວນຫຼາຍແລ້ວແມ່ນການຫວ່າງງານໃນໄລຍະສັ້ນ ເຊິ່ງເຫດຜົນດັ່ງກ່າວອາດຈະເຮັດໃຫ້ການຫວ່າງງານບໍ່ມີ

ຄວາມສຳຄັນທາງສະຖິຕິ. ແຕ່ເຖິງຢ່າງໃດກໍ່ຕາມ ຕົວປ່ຽນຂອງການຫວ່າງງານອາດຈະບໍ່ມີຄວາມສຳຄັນທາງດ້ານສະຖິຕິແຕ່ຜົນທີ່ວິເຄາະອອກມາແມ່ນມີຄວາມສຳຄັນທາງດ້ານເສດຖະສາດ ຫຼື ມີຜົນກະທົບທາງດ້ານເສດຖະສາດ ແລະ ສາມາດອະທິບາຍໄດ້ວ່າ ການຫວ່າງງານອາດຈະບໍ່ກໍ່ໃຫ້ເກີດອາຊະຍາກຳທຸກຄັ້ງແຕ່ດ້ວຍຄ່າສະເລ່ຍທີ່ປາກົດອອກມາແມ່ນສູງຫຼາຍກວ່າທຽບກັບຄ່າສູງສຸດຂອງການເກີດອາຊະຍາກຳໃນແບບຈຳລອງ (29.93748 ຄັ້ງ/1000ຄົນ > 8.34583ຄັ້ງ/1000ຄົນ) ແລະ ອາດຈະເວົ້າໄດ້ວ່າການຫວ່າງງານກໍ່ແມ່ນປັດໄຈໜຶ່ງທີ່ອາດຈະບໍ່ສົ່ງຜົນໃຫ້ເກີດມີການກໍ່ອາຊະຍາກຳໃນທຸກໆຄັ້ງ ແຕ່ວ່າເມື່ອມີການຫວ່າງງານເພີ່ມຂຶ້ນພຽງເລັກໜ້ອຍກໍ່ຈະສົ່ງຜົນກະທົບໃຫ້ ມີການກໍ່ອາຊະຍາກຳທີ່ສູງກວ່າອັດຕາທີ່ເພີ່ມຂຶ້ນຂອງການຫວ່າງງານ.

ຈຳນວນເຈົ້າໜ້າທີ່ຕຳຫຼວດ ( Policer ) ມີການພົວພັນໃນທິດທາງກົງກັນຂ້າມກັບການກໍ່ອາຊະຍາກຳ ແລະ ເປັນໄປຕາມສົມມຸດຖານທີ່ຕັ້ງໄວ້. ໝາຍຄວາມວ່າຈຳນວນເຈົ້າໜ້າທີ່ຕຳຫຼວດທີ່ເຮັດວຽກກ່ຽວກັບການຕ້ານ ແລະ ສະກັດກັ້ນການກໍ່ອາຊະຍາກຳມີຜົນຕໍ່ກັບການກໍ່ອາຊະຍາກຳ. ສາມາດອະທິບາຍໄດ້ວ່າຈຳນວນເຈົ້າໜ້າທີ່ຕຳຫຼວດເພີ່ມຂຶ້ນ 1 ຄົນ ໃນ 1 ຕົວເມືອງຈະເຮັດໃຫ້ການກໍ່ອາຊະຍາກຳຫຼຸດລົງ 0.0091637 ຄັ້ງ/1000ຄົນ ແຕ່ບໍ່ມີຄວາມສຳຄັນທາງສະຖິຕິ ເນື່ອງຈາກວ່າຈຳນວນເຈົ້າໜ້າທີ່ຕຳຫຼວດໃນພາກສ່ວນນີ້ບໍ່ໄດ້ມີການເພີ່ມຂຶ້ນຫຼາຍໃນແຕ່ລະປີ ແຕ່ຈຳນວນຜູ່ທີ່ກໍ່ອາຊະຍາກຳແມ່ນມີການເພີ່ມຂຶ້ນຢູ່ເລື້ອຍໆ ຈຶ່ງເຮັດໃຫ້ຕົວປ່ຽນນີ້ບໍ່ມີຄວາມສຳຄັນທາງສະຖິຕິ.

ຄວາມໜາແໜ້ນຂອງປະຊາກອນ (Density) ມີການພົວພັນໃນທິດທາງດຽວກັນກັບການກໍ່ອາຊະຍາກຳ ໝາຍຄວາມວ່າຄວາມໜາແໜ້ນຂອງປະຊາກອນມີຜົນຕໍ່ກັບການກໍ່ອາຊະຍາກຳ. ສາມາດອະທິບາຍໄດ້ວ່າ ຖ້າຄວາມໜາແໜ້ນຂອງປະຊາກອນເພີ່ມຂຶ້ນ 1ຄົນ/km$^2$ ຈະເຮັດໃຫ້ການກໍ່ອາຊະຍາກຳເພີ່ມຂຶ້ນ 0.0003635 ຄັ້ງ/1000ຄົນ ແລະ ມີຄວາມສຳຄັນທາງສະຖິຕິຢູ່ທີ່ລະດັບ 10% ເຊິ່ງກົງກັບແບບຈຳລອງຂອງ Theerawan. (2016) ແລະ ເປັນໄປຕາມສົມມຸດຖານທີ່ຕັ້ງໄວ້ ອາດຈະເນື່ອງມາຈາກຈຳນວນຄວາມໜາແໜ້ນຂອງພົນລະເມືອງທີ່ເພີ່ມຂຶ້ນສົ່ງຜົນເຮັດໃຫ້ໂອກາດໃນການບໍ່ມີວຽກເຮັດງານທຳເພີ່ມຂຶ້ນເຮັດໃຫ້ກຸ່ມຄົນຈຳນວນນັ້ນໃນຊຸມຊົນໃດໜຶ່ງຫັນໄປກໍ່ອາຊະຍາກຳປະເພດປຸ້ນຈີ້ຊິງຊັບ ຫຼືອື່ນໆເພື່ອຫາລາຍໄດ້ເພື່ອມາໃຊ້ຈ່າຍໃນຊີວິດປະຈຳວັນ.

ຈຳນວນຫົວໜ່ວຍທຸລະກິດ (sme) ມີການພົວພັນໃນທິດທາງດຽວກັນກັບການກໍ່ອາຊະຍາກຳ) ແຕ່ບໍ່ເປັນໄປຕາມສົມມຸດຖານທີ່ຕັ້ງໄວ້ ໝາຍຄວາມວ່າຈຳນວນຫົວຽໜ່ວຍທຸລະກິດມີຜົນຕໍ່ກັບການກໍ່ອາຊະຍາກຳ. ສາມາດອະທິບາຍໄດ້ວ່າ ການເພີ່ມຂຶ້ນຂອງຫົວໜ່ວຍທຸລະກິດ 1 ຫົວໜ່ວຍ ຈະເຮັດໃຫ້ການກໍ່ອາຊະຍາກຳເພີ່ມຂຶ້ນ 0.00111222 ຄັ້ງ/1000ຄົນ ແລະ ມີ ຄວາມສຳຄັນທາງສະຖິຕິຢູ່ທີ່ລະດັບ 10% ເຊິ່ງກົງກັບແບບຈຳລອງຂອງ Sarokarn. (2010) ແລະ Theerawan. (2016) ເຊິ່ງການທີ່ຫົວໜ່ວຍທຸລະກິດທີ່ເພີ່ມຂຶ້ນຈະເຮັດໃຫ້ເຂດດັ່ງກ່າວກາຍເປັນເຂດຊຸມຊົນ ແລະ ຈະເປັນການເພີ່ມໂອກາດໃຫ້ກັບກຸ່ມຄົນທີ່ບໍ່ດີກໍ່ອາຊະຍາກຳເພີ່ມຂຶ້ນໂດຍສະເພາະແມ່ນ ອາຊະຍາກຳປະເພດການລັກຊັບພົນລະເມືອງທີ່ມີຈຳນວນເພີ່ມຂຶ້ນເມື່ອຊຶ່ງເຂດໃດໜຶ່ງກາຍເປັນເຂດຊຸມຊົນ ຫຼື ຕົວເມືອງ.

ລະດັບການສຶກສາຂອງພົນລະເມືອງ (edu) ມີການພົວພັນໃນທິດທາງກົງກັນຂ້າມກັນກັບການກໍ່ອາຊະຍາກຳ ໝາຍຄວາມວ່າລະດັບການສຶກສາຂອງພົນລະເມືອງມີຜົນຕໍ່ກັບການກໍ່ອາຊະຍາກຳ ເຊິ່ງເປັນໄປຕາມຂໍ້ສົມມຸດຖານທີ່ຕັ້ງໄວ້, ສາມາດອະທິບາຍໄດ້ວ່າ ຖ້າລະດັບການສຶກສາຂອງພົນລະເມືອງເພີ່ມຂຶ້ນໜຶ່ງປີຈະເຮັດໃຫ້ການກໍ່ອາຊະຍາກຳຫຼຸດລົງ 0.00111222 ຄັ້ງ/1000 ຄົນ ແຕ່ບໍ່ມີຄວາມສຳຄັນທາງສະຖິຕິ ເຊິ່ງກົງກັບແບບຈຳລອງຂອງ Sarokarn. (2010) ແລະ Ashish (2014) ເນື່ອງຈາກການສຶກສາຂອງພົນລະເມືອງທີ່ເພີ່ມຂຶ້ນຈະເຮັດໃຫ້ໂອກາດໃນການຊອກຫາວຽກເຮັດງານທຳສູງຂຶ້ນ ແລະ ມີລາຍໄດ້ເພີ່ມຂຶ້ນຫຼາຍກວ່າເມື່ອທຽບໃສ່ກັບຕົ້ນທຶນຄ່າເສຍໂອກາດໃນການກະທຳຜິດຈຶ່ງເຮັດໃຫ້ການກໍ່ອາຊະຍາກຳຫຼຸດລົງ.

ລາຍໄດ້ຂອງຄົວເຮືອນ (Hh-inc) ມີການພົວພັນໃນທິດທາງດຽວກັນກັບການກໍ່ອາຊະຍາກຳ ໝາຍຄວາມວ່າລາຍໄດ້ຂອງຄົວເຮືອນມີຜົນຕໍ່ກັບການກໍ່ອາຊະຍາກຳ ແຕ່ບໍ່ເປັນໄປຕາມສົມມຸດຖານທີ່ຕັ້ງໄວ້. ສາມາດອະທິບາຍໄດ້ວ່າ ຖ້າລາຍໄດ້ຂອງຄົວເຮືອນເພີ່ມຂຶ້ນ

100,000 ກີບ/ເດືອນ ຈະເຮັດໃຫ້ການກໍ່ອາຊະຍາກຳ ເພີ່ມຂຶ້ນ 0.177581 ຄັ້ງ/1000 ຄົນ ແລະ ມີຄວາມສຳຄັນທາງສະຖິຕິຢູ່ທີ່ລະດັບ 1% ເຊິ່ງກົງກັບແບບຈຳລອງຂອງ Theerawan. (2016) ເຊິ່ງສາມາດອະທິບາຍໄດ້ວ່າລາຍໄດ້ຂອງຄົວເຮືອນທີ່ເພີ່ມຂຶ້ນນັ້ນອາດແມ່ນເພີ່ມຂຶ້ນສະເພາະບັນດາຄົວເຮືອນທີ່ມີວຽກເຮັດງານທຳ ແຕ່ບໍ່ແມ່ນບັນດາຄອບຄົວທັງໝົດ ແລະ ການເພີ່ມຂຶ້ນຂອງລາຍໄດ້ນັ້ນເຮັດໃຫ້ຊ່ອງຫວ່າງຂອງລາຍໄດ້ກ້ວາງຂຶ້ນ ແລະ ເປັນສາເຫດເຮັດໃຫ້ຜູ້ທີ່ບໍ່ມີລາຍໄດ້ມີຄວາມຕ້ອງການກໍ່ອາຊະຍາກຳເພີ່ມຂຶ້ນ ຫຼື ເວົ້າໄດ້ວ່າການຫາລາຍໄດ້ທີ່ໄດ້ຈາກການເຮັດວຽກສຸດຈະລິດມີຄ່າຕອບແທນຕ່ຳກວ່າເມື່ອທຽບກັບເວລາທີ່ໃຊ້ໃນການກໍ່ອາຊະຍາກຳຈຶ່ງກັບໄປກໍ່ອາຊະຍາກຳເພື່ອຫາລາຍໄດ້ທົດແທນ. ດັ່ງນັ້ນ, ຈຶ່ງຫັນໄປກໍ່ອາຊະຍາກຳຕາມທິດສະດີຂອງ Becker (1968) ໂດຍ Ehrl.ich. ນອກຈາກນັ້ນ, ຍັງສາມາດເວົ້າໄດ້ວ່າອາສະຍາກຳບາງປະເພດເຊັ່ນ: ຄະດີປຸ້ນຈີ້ຊີງຊັບ ຜູ້ທີ່ກະທຳຜິດອາດບໍ່ໄດ້ຄຳນຶງເຖິງລາຍໄດ້ ແລະ ພວກເຂົາມີຄວາມຜິດປົກກະຕິທາງຈິດ ເຖິງແມ່ນວ່າພວກເຂົາຈະມີລາຍໄດ້ກໍ່ຕາມແຕ່ພວກເຂົາກໍ່ຍັງເລືອກທີ່ຈະກໍ່ອາຊະຍາກຳສິ່ງຜົນເຮັດໃຫ້ຕົວປ່ຽນດັ່ງກ່າວບໍ່ມີຄວາມສຳຄັນທາງສະຖິຕິ.

ຈຳນວນພົນລະເມືອງທີ່ອາໄສຢູ່ເຂດຕົວເມືອງ (Urban) ມີການພົວພັນໃນທິດທາງກົງກັນຂ້າມກັບກັບການກໍ່ອາຊະຍາກຳ ແລະ ເປັນໄປຕາມສົມມຸດຖານທີ່ຕັ້ງໄວ້ ໝາຍຄວາມວ່າ ຖ້າ ພົນລະເມືອງອາໄສຢູ່ໃນຕົວເມືອງເພີ່ມຂຶ້ນ ຈະເຮັດໃຫ້ການກໍ່ອາຊະຍາກຳຫຼຸດລົງ 0.5450768 ຄັ້ງ/1000 ຄົນ ແລະ ມີຄວາມສຳຄັນທາງສະຖິຕິຢູ່ທີ່ລະດັບ 10%. ອາດເນື່ອງຈາກພົນລະເມືອງທີ່ອາໄສຢູ່ໃນຕົວເມືອງມີໂອກາດເຂົ້າເຖິງການສຶກສາທີ່ດີ ແລະ ຢູ່ໃນສະພາບແວດລ້ອມສັງຄົມທີ່ດີ ກວ່າພົນລະເມືອງຜູ່ທີ່ອາໄສຢູ່ເຂດຊົນນະບົດ ເຮັດໃຫ້ມີໂອ ກາດໃນ

**ສະຫຼຸບຜົນການຄົ້ນຄວ້າ**

ໃນການສຶກສາຄົ້ນຄວ້າຄັ້ງນີ້ ມີຈຸດປະສົງທີ່ຈະສຶກສາຜົນກະທົບຂອງການຫວ່າງງານຕໍ່ກັບການເກີດອາຊະຍາກຳໃນ ສປປ ລາວ. ໂດຍການສຶກສາປະກອບດ້ວຍ 2 ຈຸດປະສົງ ຫຼື ແບ່ງອອກເປັນສອງສ່ວນຄື: ສຶກສາສະພາບລວມຂອງການເກີດອາຊະຍາກຳໃນ ສປປ ລາວຕັ້ງແຕ່ປີ 2013-2019 ແລະ ສຶກສາຜົນປະທົບຂອງການຫວ່າງງານຕໍ່ກັບການກໍ່ອາຊະຍາກຳໃນ ສປປ ລາວ. ເຊິ່ງກຸ່ມຕົວຢ່າງໃນການສຶກສາຄັ້ງນີ້ແມ່ນໄດ້ເກັບກຳ ແລະ ຮວບຮວມຂໍ້ມູນທຸຕິຍະພູມ ຫຼື ຂໍ້ມູນມືສອງ (Secondary data ) ຈາກກົມໃຫຍ່ຕຳຫຼວດກະຊວງປ້ອງກັນຄວາມສະຫງົບ, ສູນສະຖິຕິແຫ່ງຊາດ ( Lao statistics bureau ) ທີ່ໄດ້ຈາກບົດລາຍງານຜົນການສຳຫຼວດແຮງງານໃນ ສປປ ລາວຄັ້ງທີ II ປີ 2017 (Lao labor force survey II) ແລະ ກະຊວງແຜນການ ແລະ ການລົງທຶນ. ໃນການວິເຄາະໄດ້ມີການຄຳນວນຄື: ສະຫຼຸບຂໍ້ມູນເພື່ອຊອກຫາຄວາມຖີ່, ສ່ວນຮ້ອຍ, ຄ່າສະເລ່ຍໃນການວັດລະດັບຜົນທີ່ມີຕໍ່ການກໍ່ອາຊະຍາກຳໂດຍການນຳໃຊ້ສົມຜົນການຄາດປະມານແບບກຳລັງສອງນ້ອຍສຸດ ( Ordinary least square: OLS ) ຂອງເສດຖາມິຕິເພື່ອອະທິບາຍຜົນຂອງແຕ່ລະຕົວປ່ຽນ.

ຜົນຂອງການສຶກສາຜົນກະທົບຂອງການຫວ່າງງານຕໍ່ກັບການກໍ່ອາຊະຍາກຳໃນ ສປປ ລາວ ສາມາດສະຫຼຸບໄດ້ວ່າມີຫຼາຍບັນຫາ, ເຊິ່ງບັນຫາທີ່ມີຄວາມສຳຄັນທາງສະຖິຕິແມ່ນມີ ຄວາມໜາ ແໜ້ນຂອງພົນລະເມືອງ, ຈຳນວນຫົວໜ່ວຍທຸລະກິດ, ລາຍໄດ້ຂອງຄົວເຮືອນ ແລະ ພົນລະເມືອງທີ່ອາໄສຢູ່ຕົວເມືອງ.

ຜົນການສຶກສາສາມາດສະຫຼຸບໄດ້ວ່າ: ການຫວ່າງງານແມ່ນການພົວພັນກັນໃນທິດທາງດຽວກັນກັບການກໍ່ອາຊະຍາກຳຕາມສົມມຸດຖານທີ່ຕັ້ງໄວ້ໃນເບື້ອງຕົ້ນແຕ່ບໍ່ມີຄວາມສຳຄັນທາງສະຖິຕິ, ເຖິງແນວໃດກໍ່ຕາມການຫວ່າງງານອາດຈະບໍ່ກໍ່ໃຫ້ເກີດອາຊະຍາກຳໃນທຸກຄັ້ງ ແລະ ອາດບໍ່ມີຄວາມສຳຄັນທາງສະຖິຕິ ແຕ່ຍັງມີຄວາມສຳຄັນທາງເສດຖະສາດ ຫຼື ຜົນກະທົບທາງເສດຖະສາດເຫັນໄດ້ຈາກຜົນຂອງການວິເຄາະແມ່ນ ການຫວ່າງງານສົ່ງຜົນໃຫ້ມີການເກີດອາຊະຍາກຳສູງຫຼາຍ ແລະ ຍັງສູງກວ່າຄ່າສູງສຸດຈາກການທົດສອບອີກດ້ວຍ. ດັ່ງນັ້ນ, ການຫວ່າງງານກໍ່ອາດເປັນປັດໄຈໜຶ່ງທີ່ບໍ່ຄວນເບິ່ງຂ້າມ ແລະ ເປັນປັດໄຈໜຶ່ງທີ່ເປັນໄປໄດ້ທີ່ຈະກໍ່ໃຫ້ເກີດມີການກໍ່ອາຊະຍາກຳ. ແລະ ຈຳນວນເຈົ້າໜ້າທີ່ຕຳຫຼວດ, ລະດັບການສຶກສາຂອງພົນລະເມືອງ ມີການພົວພັນໃນທິດທາງດຽວກັນ ແລະ ເປັນໄປຕາມສົມມຸດຖານທີ່ຕັ້ງໄວ້ແຕ່ບໍ່ມີຄວາມສຳຄັນທາງສະຖິຕິ ໝາຍຄວາມວ່າ ຈຳນວນເຈົ້າໜ້າທີ່ຕຳຫຼວດ, ລະດັບການສຶກສາຂອງພົນລະເມືອງມີຜົນຕໍ່ກັບການກໍ່ອາຊະຍາກຳ. ສ່ວນຕົວປ່ຽນຂອງຄວາມໜາແໜ້ນຂອງພົນລະເມືອງມີການພົວພັນໃນທິດທາງດຽວກັນ ແລະ ເປັນໄປຕາມສົມມຸດ

ຖານທີ່ຕັ້ງໄວ້ ແລະ ມີຄວາມສຳຄັນທາງສະຖິຕິໝາຍຄວາມວ່າຄວາມໜາແໜ້ນຂອງພົນລະເມືອງມີຜົນຕໍ່ກັບການກໍ່ອາຊະຍາກຳ. ສ່ວນຕົວປ່ຽນຫົວໜ່ວຍທຸລະກິດ, ລາຍໄດ້ຂອງຄົວເຮືອນ ແລະ ພົນລະເມືອງທີ່ອາໄສຢູ່ຕົວເມືອງມີການພົວພັນກັນໃນທິດທາງກົງກັນຂ້າມ ແລະ ມີຄວາມສຳຄັນທາງສະຖິຕິ ໝາຍຄວາມວ່າຫົວໜ່ວຍທຸລະກິດ, ລາຍໄດ້ຂອງຄົວເຮືອນ ແລະ ພົນລະເມືອງທີ່ອາໄສຢູ່ຕົວເມືອງມີຜົນຕໍ່ກັບການກໍ່ອາຊະຍາກຳ.

**ຂໍ້ສະເໜີແນະໃນການຄົ້ນຄວ້າຕໍ່ໄປ**

ອີງຕາມຜົນຂອງການສຶກສາຂອງບົດຄົ້ນຄວ້າໃນຄັ້ງນີ້ເຫັນວ່າ: ຂໍ້ມູນຂອງພວກເຮົາທີ່ນຳໃຊ້ເປັນຂໍ້ມູນທຸຕິຍະພູມ ຫຼື ຂໍ້ມູນມືສອງທີ່ໄດ້ເກັບຮວບຮວມຂໍ້ມູນໂດຍ ກົມໃຫຍ່ຕຳຫຼວດ , ກະຊວງແຜນການ ແລະ ການລົງທຶນ ແລະ ບົດລາຍງານການສຳຫຼວດແຮງງານຄັ້ງທີ II ປີ 2017 ຈາກສູນສະຖິຕິແຫ່ງຊາດ ແລະ ນຳໃຊ້ຂໍ້ມູນລະດັບເມືອງໃນການວິເຄາະອາດຈະເຮັດໃຫ້ຜົນຂອງການສຶກສາບໍ່ເປັນໄປຕາມທີ່ຕັ້ງສົມມຸດຖານໄວ້ ຫຼື ບາງຕົວປ່ຽນຂໍ້ມູນບໍ່ຄົບຖ້ວນສົມບູນເຊິ່ງເປັນຜົນຂອງການສຶກສາບໍ່ເປັນໄປຕາມຂໍ້ສົມມຸດຖານທີ່ຕັ້ງໄວ້ ແລະ ຕົວປ່ຽນທີ່ໃຊ້ໃນການສຶກສາອາດຈະບໍ່ສິ່ງຜົນກະທົບໂດຍກົງຕໍ່ກັບການກໍ່ອາຊະຍາກຳ ແລະ ບໍ່ໄດ້ມີການແຍກປະເພດຂອງການເກີດອາຊະຍາກຳໃຫ້ຈະແຈ້ງຂຶ້ນຕື່ມ. ດັ່ງນັ້ນ, ເພື່ອໃຫ້ການສຶກສາຖືກຕ້ອງຕາມຈຸດປະສົງທີ່ຕັ້ງໄວ້ ແລະ ຜົນທີ່ຈະແຈ້ງຂຶ້ນຕື່ມ, ໃນການສຶກສາຄົ້ນຄວ້າຄັ້ງຕໍ່ໄປຂອງຜູ່ທີ່ສົນໃຈໃນການຄົ້ນຄ້ວາໃນຫົວຂໍ້ ຫຼື ບັນຫາດັ່ງກ່າວ ຄວນພິຈາລະນາໃນການນຳໃຊ້ຂໍ້ມູນໃນລະດັບທີ່ນ້ອຍກວ່າຂໍ້ມູນທີ່ນຳໃຊ້ໃນການສຶກສາຄັ້ງນີ້. ນອກຈາກນັ້ນ, ການພິຈາລະນາບັນດາຕົວປ່ຽນ ຫຼື ປັດໃຈອື່ນໆທີ່ແທດ ເໝາະກັບສົມຜົນ ແລະ ເພີ່ມຕົວປ່ຽນທີ່ກ່ຽວຂ້ອງກັບບັນຫາດັ່ງກ່າວໃຫ້ຫຼາຍຂຶ້ນ ເພື່ອປະສິດທິພາບໃນການຄົ້ນຄ້ວາເພີ່ມຂຶ້ນຫຼາຍກວ່າເກົ່າ.

**ເອກະສານອ້າງອີງ**


ຢູ່ບຳລຸງ, ອ. (1989). ສາເຫດແຫ່ງການເກີດອາຊະຍາກຳຕາມຫຼັກພຸດທະນາສະໜາ. *ອາຊະຍາກຳ ແລະ ອາຍາວິທະຍາ* (ໜ້າ. 213-221). ກຸງເທບ: ວາລະສານກະເສດສາດ (ສັງຄົມ).

AKRUN, T. (2016). Determinants of juvenile delinquency rate in Thailand. *Doctoral dissertation Chulalongkorn University*. Retrieved from https://www.car.chula.ac.th/display7.php?bib=b2156360

Becker, G. S. (1968). Crime and Punishment: an Economic Approach. *Journal of Political Economy*, 169-217. Retrieved from https://link.springer.com/chapter/10.1007/978-1-349-62853-7_2

Bharadwaj, A. (2014). Is poverty the mother of crime? Empirical. *Atlantic Review of Economics*, 1. Retrieved from https://www.econstor.eu/bitstream/10419/146581/1/792110218.pdf

Nikolaos, D., & Gkanas Alexandors, G. (2009). The effect of socio-economic determinants on crime rates: An empirical research in the case of Greece with cointegration analysis. *International Journal of Economic Sciences and Reseach* , 2(2), 51-64. Retrieved from https://www.ceeol.com/search/article-detail?id=158562

Haddad, G.K, & Hamed Markazi Moghadam, H. K. (2010). The socioeconomic and demographic determinants. *European Journal of Law and Economics*, (32),99-114. Retrieved from https://sci-hub.se/https://link.springer.com/article/10.1007%2Fs10657-010-9152-4

Khan, K., Ahmed, J.,Nawaz, M.,& Zaman, K. (2015). The Socio-Economic Determinants of Crime in Pakistan: New Evidence. *ARAB ECONOMICS AND BUSINESS JOURNAL*, 73-81. Retrieved from https://www.econstor.eu/bitstream/10419/187527/1/S2214462515000109-main.pdf.